ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກົດໝາຍ

## ວ່າດ້ວຍການສົ່ງເສີມການລົງທຶນ

## (ສະບັບປັບປຸງ)

**2024**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 130 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 / 06 / 24

**ມະຕິ**
**ກອງປະຊຸມສະພາແຫ່ງຊາດ**
**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ**
**(ສະບັບປັບປຸງ)**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມຄັ້ງວັນທີ 26 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 28 ມິຖຸນາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 124 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 130/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 24/ຄປຈ, ລົງວັນທີ 29 ກໍລະກົດ 2024.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

# ສາລະບານ

ໜ້າ

**ພາກທີ I ບົດບັນຍັດທົ່ວໄປ......................................................1**
ມາດຕາ 1 (ປັບປຸງ) ຈຸດປະສົງ...................................................1
ມາດຕາ 2 (ປັບປຸງ) ການສົ່ງເສີມການລົງທຶນ.....................................1
ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ..........................................2
ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານສົ່ງເສີມ
ການລົງທຶນ...................................................4
ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານສົ່ງເສີມການລົງທຶນ.............4
ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ...............................5
ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ............................................5

**ພາກທີ II ນະໂຍບາຍສົ່ງເສີມ, ຊ່ວຍໜູນ ແລະ ການປົກປ້ອງການລົງທຶນ...5**
**ໝວດທີ 1 ນະໂຍບາຍສົ່ງເສີມການລົງທຶນ.......................................5**
ມາດຕາ 8 (ປັບປຸງ) ນະໂຍບາຍສົ່ງເສີມການລົງທຶນ...............................5
ມາດຕາ 9 (ປັບປຸງ) ການລົງທຶນໃນກິດຈະການຕາມຂະແໜງການ................6
ມາດຕາ 10 (ປັບປຸງ) ການລົງທຶນຕາມເຂດ.........................................7
ມາດຕາ 11 (ປັບປຸງ) ນະໂຍບາຍດ້ານອາກອນກຳໄລ ໃນກິດຈະການ
ຕາມຂະແໜງການ ແລະ ເຂດ...............................7
ມາດຕາ 12 (ປັບປຸງ) ນະໂຍບາຍສົ່ງເສີມດ້ານ ພາສີ, ອາກອນລາຍໄດ້ ແລະ
ອາກອນມູນຄ່າເພີ່ມ........................................8
ມາດຕາ 13 ນະໂຍບາຍເຂົ້າເຖິງແຫຼ່ງທຶນ..........................................9
ມາດຕາ 14 (ປັບປຸງ) ນະໂຍບາຍຂະຫຍາຍການລົງທຶນ...........................9
ມາດຕາ 15 (ປັບປຸງ) ນະໂຍບາຍຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານ
ທີ່ດິນຂອງລັດ.............................................10
ມາດຕາ 16 (ປັບປຸງ) ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນຂອງລັດ........10

**ໝວດທີ 2 ນະໂຍບາຍຊ່ວຍໜູນການລົງທຶນ**.................................11
ມາດຕາ 17 ນະໂຍບາຍຊ່ວຍໜູນການລົງທຶນ.........................................11
ມາດຕາ 18 ນະໂຍບາຍດ້ານ ຂໍ້ມູນ ຂ່າວສານ........................................11
ມາດຕາ 19 (ປັບປຸງ) ນະໂຍບາຍຊ່ວຍໜູນອື່ນ......................................12
ມາດຕາ 20 (ປັບປຸງ) ການຈັດຕັ້ງປະຕິບັດການໃຫ້ນະໂຍບາຍສົ່ງເສີມ.........12

**ໝວດທີ 3 ການປົກປ້ອງການລົງທຶນ**.............................................13
ມາດຕາ 21 ການປົກປ້ອງການລົງທຶນ...............................................13
ມາດຕາ 22 (ປັບປຸງ) ຮູບການການປົກປ້ອງການລົງທຶນ...........................13
ມາດຕາ 23 ການປົກປ້ອງຊັບສິນທາງປັນຍາ.........................................13

**ພາກທີ III ການເຄື່ອນໄຫວການລົງທຶນ**...........................................14
ມາດຕາ 24 ການເຄື່ອນໄຫວການລົງທຶນ.............................................14

**ໝວດທີ 1 ຮູບການ ແລະ ປະເພດກິດຈະການ ການລົງທຶນ**................14
ມາດຕາ 25 ຮູບການ ການລົງທຶນ....................................................14
ມາດຕາ 26 ການລົງທຶນຝ່າຍດຽວຂອງຜູ້ລົງທຶນ ພາຍໃນ ຫຼື ຕ່າງປະເທດ......14
ມາດຕາ 27 (ປັບປຸງ) ການລົງທຶນຮ່ວມລະຫວ່າງ ຜູ້ລົງທຶນພາຍໃນ
ກັບ ຕ່າງປະເທດ.............................................14
ມາດຕາ 28 (ປັບປຸງ) ການລົງທຶນທຸລະກິດຮ່ວມຕາມສັນຍາ.....................15
ມາດຕາ 29 ການລົງທຶນຮ່ວມລະຫວ່າງ ລັດວິສາຫະກິດ ແລະ ວິສາຫະກິດ
ເອກະຊົນ..........................................................................15
ມາດຕາ 30 ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ.........15
ມາດຕາ 31 (ປັບປຸງ) ປະເພດກິດຈະການ ການລົງທຶນ..........................16

**ໝວດທີ 2 ກິດຈະການ ການລົງທຶນທົ່ວໄປ**...................................16
ມາດຕາ 32 ປະເພດກິດຈະການ ການລົງທຶນທົ່ວໄປ..............................16
ມາດຕາ 33 (ປັບປຸງ) ກິດຈະການໃນບັນຊີຄວບຄຸມ..............................16
ມາດຕາ 34 (ປັບປຸງ) ກິດຈະການບໍ່ຢູ່ໃນບັນຊີຄວບຄຸມ.........................17

**ໝວດທີ 3 ຂັ້ນຕອນການລົງທຶນໃນກິດຈະການທົ່ວໄປ......................17**
ມາດຕາ 35 (ປັບປຸງ) ການສະເໜີລົງທຶນໃນກິດຈະການໃນບັນຊີຄວບຄຸມ.....17
ມາດຕາ 36 (ປັບປຸງ) ກຳນົດເວລາ ພິຈາລະນາຄຳຮ້ອງຂໍລົງທຶນ
ໃນກິດຈະການໃນບັນຊີຄວບຄຸມ..........................17
ມາດຕາ 37 (ໃໝ່) ການປ່ຽນແປງການລົງທຶນໃນກິດຈະການ
ໃນບັນຊີຄວບຄຸມ..............................................18
ມາດຕາ 38 (ປັບປຸງ) ການສະເໜີລົງທຶນໃນກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ..19
ມາດຕາ 39 (ປັບປຸງ) ການພິຈາລະນາຂຶ້ນທະບຽນວິສາຫະກິດໃນກິດຈະການ
ບໍ່ຢູ່ໃນບັນຊີຄວບຄຸມ......................................19
ມາດຕາ 40 ອາຍຸການລົງທຶນໃນກິດຈະການທົ່ວໄປ..............................19

**ໝວດທີ 4 ກິດຈະການ ການລົງທຶນສຳປະທານ..........................19**
ມາດຕາ 41 (ປັບປຸງ) ກິດຈະການ ການລົງທຶນສຳປະທານ.......................19
ມາດຕາ 42 (ປັບປຸງ) ອາຍຸການລົງທຶນໃນກິດຈະການສຳປະທານ...............20

**ໝວດທີ 5 ເງື່ອນໄຂ ແລະ ຂັ້ນຕອນການລົງທຶນ ໃນກິດຈະການ
ສຳປະທານ.......................................................................20**
ມາດຕາ 43 ເງື່ອນໄຂຂອງຜູ້ລົງທຶນ ໃນກິດຈະການສຳປະທານ..................20
ມາດຕາ 44 (ປັບປຸງ) ຄຳຮ້ອງ ແລະ ເອກະສານປະກອບການຂໍລົງທຶນ..........21
ມາດຕາ 45 (ປັບປຸງ) ການຍື່ນຄຳຮ້ອງຂໍເຊັນບົດບັນທຶກຄວາມເຂົ້າໃຈ ຫຼື
ສັນຍາ ເພື່ອສຶກສາຄວາມເປັນໄປໄດ້ຂອງໂຄງການ
ລົງທຶນ ໃນກິດຈະການສຳປະທານ........................21
ມາດຕາ 46 (ປັບປຸງ) ຂັ້ນຕອນ ແລະ ກຳນົດເວລາໃນການພິຈາລະນາ
ອະນຸຍາດລົງທຶນໃນກິດຈະການສຳປະທານ...............22
ມາດຕາ 47 ການປ່ຽນແປງການລົງທຶນໃນກິດຈະການສຳປະທານ...............24
ມາດຕາ 48 (ປັບປຸງ) ການມອບສິດ ຫຼື ໂອນກິດຈະການ ຕາມສັນຍາ
ສຳປະທານ.................................................25
ມາດຕາ 49 (ປັບປຸງ) ສິດໃນການຮັບຮອງຂອງສະພາແຫ່ງຊາດ.................25
ມາດຕາ 50 (ປັບປຸງ) ສິດໃນການຮັບຮອງຈາກສະພາປະຊາຊົນຂັ້ນແຂວງ.....26

**ໝວດທີ 6 ທຶນຈົດທະບຽນ ແລະ ການນຳເຂົ້າທຶນ**........................27
ມາດຕາ 51 ທຶນຈົດທະບຽນໃນກິດຈະການທົ່ວໄປ...............................27
ມາດຕາ 52 (ປັບປຸງ) ທຶນຈົດທະບຽນໃນກິດຈະການສຳປະທານ................27
ມາດຕາ 53 (ປັບປຸງ) ການນຳເຂົ້າທຶນໃນກິດຈະການທົ່ວໄປ.....................28
ມາດຕາ 54 (ປັບປຸງ) ການນຳເຂົ້າທຶນໃນກິດຈະການສຳປະທານ................28

**ໝວດທີ 7 ຫ້ອງການຜູ້ຕາງໜ້າ**..................................................29
ມາດຕາ 55 (ປັບປຸງ) ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ.........29
ມາດຕາ 56 (ປັບປຸງ) ການສະເໜີສ້າງຕັ້ງຫ້ອງການຜູ້ຕາງໜ້າ...................29

**ພາກທີ IV ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ**.......29
ມາດຕາ 57 (ປັບປຸງ) ເຂດເສດຖະກິດພິເສດ.......................................29
ມາດຕາ 58 (ປັບປຸງ) ການສ້າງຕັ້ງເຂດເສດຖະກິດພິເສດ........................30
ມາດຕາ 59 (ປັບປຸງ) ເງື່ອນໄຂການສ້າງຕັ້ງເຂດເສດຖະກິດພິເສດ..............30
ມາດຕາ 60 (ປັບປຸງ) ການຈັດຕັ້ງຄຸ້ມຄອງການລົງທຶນເຂດເສດຖະກິດພິເສດ..31
ມາດຕາ 61 (ໃໝ່) ເຂດເສດຖະກິດສະເພາະ.........................................31
ມາດຕາ 62 (ປັບປຸງ) ອາຍຸສຳປະທານທີ່ດິນເພື່ອພັດທະນາ ເຂດເສດຖະກິດ
ພິເສດ ແລະ ເຂດເສດຖະກິດສະເພາະ.....................31
ມາດຕາ 63 (ໃໝ່) ການສະເໜີລົງທຶນໃນເຂດເສດຖະກິດພິເສດ ແລະ
ເຂດເສດຖະກິດສະເພາະ......................................32
ມາດຕາ 64 (ໃໝ່) ນະໂຍບາຍສົ່ງເສີມເຂດເສດຖະກິດພິເສດ ແລະ
ເຂດເສດຖະກິດສະເພາະ......................................32

**ພາກທີ V ການອອກໄປລົງທຶນຢູ່ຕ່າງປະເທດ**...................................34
ມາດຕາ 65 (ປັບປຸງ) ການສະເໜີອອກໄປລົງທຶນຢູ່ຕ່າງປະເທດ.................34
ມາດຕາ 66 (ປັບປຸງ) ເງື່ອນໄຂການອອກໄປລົງທຶນຢູ່ຕ່າງປະເທດ..............34
ມາດຕາ 67 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ລົງທຶນ ຢູ່ ສປປ ລາວ
ທີ່ອອກ ໄປລົງທຶນຢູ່ຕ່າງປະເທດ..........................34

**ພາກທີ VI ສິດ ແລະ ພັນທະຂອງຜູ້ລົງທຶນ**.....................................35
**ໝວດທີ 1 ສິດຂອງຜູ້ລົງທຶນ**.....................................................35
ມາດຕາ 68 (ປັບປຸງ) ສິດລວມຂອງຜູ້ລົງທຶນ.....................................35
ມາດຕາ 69 ສິດໃນການຄຸ້ມຄອງ, ບໍລິຫານກິດຈະການການລົງທຶນຂອງຕົນ...36
ມາດຕາ 70 (ປັບປຸງ) ສິດໃນການຈ້າງງານ........................................37
ມາດຕາ 71 ສິດໃນການຢູ່ອາໄສສໍາລັບຜູ້ລົງທຶນຕ່າງປະເທດ.....................37
ມາດຕາ 72 ສິດຂອງຜູ້ລົງທຶນຕ່າງປະເທດໃນການສົ່ງທຶນ, ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ.............................................38

**ໝວດທີ 2 ພັນທະຂອງຜູ້ລົງທຶນ**................................................38
ມາດຕາ 73 (ປັບປຸງ) ພັນທະດ້ານເສດຖະກິດ......................................38
ມາດຕາ 74 (ປັບປຸງ) ພັນທະດ້ານສັງຄົມ...........................................39
ມາດຕາ 75 (ປັບປຸງ) ພັນທະດ້ານສິ່ງແວດລ້ອມ..................................40

**ພາກທີ VII ການບໍລິການ ການລົງທຶນປະຕູດຽວ**..............................41
ມາດຕາ 76 (ປັບປຸງ) ຫ້ອງການບໍລິການ ການລົງທຶນປະຕູດຽວ.................41
ມາດຕາ 77 (ປັບປຸງ) ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ....41
ມາດຕາ 78 (ປັບປຸງ) ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ.....41
ມາດຕາ 79 (ປັບປຸງ) ຫຼັກການບໍລິການ ການລົງທຶນປະຕູດຽວ..................42
ມາດຕາ 80 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການບໍລິການ ການລົງທຶນ ປະຕູດຽວ.................................................42

**ພາກທີ VIII ການໂຈະ, ຍົກເລີກ, ສິ້ນສຸດການລົງທຶນ ແລະ ການແກ້ໄຂ ຂໍ້ຂັດແຍ່ງ**..............................................................44
ມາດຕາ 81 (ປັບປຸງ) ການໂຈະການຈັດຕັ້ງປະຕິບັດໂຄງການລົງທຶນ............44
ມາດຕາ 82 (ປັບປຸງ) ສາເຫດການຍົກເລີກການລົງທຶນ..........................45
ມາດຕາ 83 (ປັບປຸງ) ການຍົກເລີກການລົງທຶນ....................................45
ມາດຕາ 84 (ປັບປຸງ) ການສິ້ນສຸດການລົງທຶນ.....................................45
ມາດຕາ 85 (ໃໝ່) ການແກ້ໄຂຂໍ້ຂັດແຍ່ງ..........................................46

**ພາກທີ IX ຂໍ້ຫ້າມ**..........................................................46
ມາດຕາ 86 ຂໍ້ຫ້າມທົ່ວໄປ..........................................................46
ມາດຕາ 87 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ລົງທຶນ..........................................46
ມາດຕາ 88 (ປັບປຸງ) ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ..47

**ພາກທີXການຄຸ້ມຄອງແລະການກວດກາວຽກງານສົ່ງເສີມການລົງທຶນ**..48
**ໝວດທີ 1 ການຄຸ້ມຄອງວຽກງານສົ່ງເສີມການລົງທຶນ**....................48
ມາດຕາ 89 (ປັບປຸງ) ອົງການຄຸ້ມຄອງວຽກງານສົ່ງເສີມການລົງທຶນ...........48
ມາດຕາ 90 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການແຜນການ ແລະ ການລົງທຶນ.............................................48
ມາດຕາ 91 (ປັບປຸງ) ສິດ ແລະ ໜ້າທີ່ ຂະແໜງການອຸດສາຫະກໍາ ແລະ ການຄ້າ..................................................50
ມາດຕາ 92 ສິດ ແລະ ໜ້າທີ່ ຂອງຂະແໜງການການເງິນ.......................51
ມາດຕາ 93 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະກໍາມະການປົກຄອງ ຂັ້ນແຂວງ..................................................52
ມາດຕາ 94 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ..53

**ໝວດທີ 2 ການກວດກາວຽກງານສົ່ງເສີມການລົງທຶນ**....................54
ມາດຕາ 95 (ປັບປຸງ) ອົງການກວດກາວຽກງານສົ່ງເສີມການລົງທຶນ...........54
ມາດຕາ 96 (ປັບປຸງ) ເນື້ອໃນການກວດກາ........................................54
ມາດຕາ 97 (ປັບປຸງ) ຮູບການ ການກວດກາ......................................55

**ພາກທີ XI ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**......55
ມາດຕາ 98 ນະໂຍບາຍຕໍ່ຜູ້ມີຜົນງານ................................................55
ມາດຕາ 99 ມາດຕະການຕໍ່ຜູ້ລະເມີດ.................................................55

**ພາກທີ XII ບົດບັນຍັດສຸດທ້າຍ**...................................................56
ມາດຕາ 100 ການຈັດຕັ້ງປະຕິບັດ....................................................56
ມາດຕາ 101 (ປັບປຸງ) ຜົນສັກສິດ....................................................56

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 62 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍການສົ່ງເສີມການລົງທຶນ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສົ່ງເສີມ, ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ການລົງທຶນ ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຖືກຕ້ອງ, ໄດ້ຮັບການປົກປ້ອງ ແລະ ນະໂຍບາຍດ້ານຕ່າງໆ ຈາກລັດ ແນໃສ່ ດຶງດູດການລົງທຶນທີ່ມີຄຸນນະພາບ, ຮັບປະກັນສິດ ແລະ ຜົນປະໂຫຍດຂອງ ລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ ສາມາດເຊື່ອມໂຍງກັບເສດຖະກິດພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 (ປັບປຸງ) ການສົ່ງເສີມການລົງທຶນ

ການສົ່ງເສີມການລົງທຶນ ແມ່ນ ການວາງນະໂຍບາຍສົ່ງເສີມ, ການສ້າງສະພາບແວດລ້ອມ ແລະ ເງື່ອນໄຂ ອຳນວຍຄວາມສະດວກ ໃນດ້ານຕ່າງໆແກ່ການ

ລົງທຶນ ເພື່ອໃຫ້ຜູ້ລົງທຶນ ສາມາດດຳເນີນທຸລະກິດ ໄດ້ຢ່າງສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການລົງທຶນ** ໝາຍເຖິງ ການນຳເອົາເງິນທຶນ, ຊັບສິນ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ຂອງຜູ້ລົງທຶນ ເພື່ອດຳເນີນທຸລະກິດ ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ;

2. **ຜູ້ລົງທຶນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນ ຢູ່ພາຍໃນ ສປປ ລາວ ຫຼື ຢູ່ຕ່າງປະເທດ ຢ່າງຖືກຕ້ອງຕາມກົດໝາຍ;

3. **ຜູ້ລົງທຶນພາຍໃນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ລາວ ທີ່ຂຶ້ນທະບຽນວິສາຫະກິດຕາມກົດໝາຍຂອງ ສປປ ລາວ;

4. **ຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ຕ່າງປະເທດ ທີ່ເຂົ້າມາລົງທຶນ ແລະ ຂຶ້ນທະບຽນວິສາຫະກິດຕາມກົດໝາຍຂອງ ສປປ ລາວ;

5. **ຜູ້ພັດທະນາ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ແຫ່ງ ສປປ ລາວ ໃຫ້ລົງທຶນ ເພື່ອສຶກສາຄວາມເປັນໄປໄດ້ໃນການພັດທະນາ ເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ ຕາມບົດບັນທຶກຄວາມເຂົ້າໃຈ ຫຼື ລົງທຶນ ເພື່ອດຳເນີນການພັດທະນາ ເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ ຕາມສັນຍາພັດທະນາ;

6. **ຜູ້ລົງທຶນໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນ ເພື່ອດຳເນີນທຸລະກິດ ການຜະລິດ, ການຄ້າ ແລະ ການບໍລິການ ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;

7. **ຊັບສິນຂອງຜູ້ລົງທຶນ** ໝາຍເຖິງ ທຶນທີ່ເປັນຊັບສິນມີຕົວຕົນ ແລະ ທຶນທີ່ເປັນຊັບສິນບໍ່ມີຕົວຕົນ ຊຶ່ງເປັນກຳມະສິດຂອງຜູ້ລົງທຶນ ແລະ ສາມາດນຳໄປເປັນຫຼັກຊັບຄ້ຳປະກັນກູ້ຢືມເງິນຈາກທະນາຄານ;

8. **ທຶນທີ່ເປັນຊັບສິນມີຕົວຕົນ** ໝາຍເຖິງ ເງິນຕາ, ສັງຫາລິມະຊັບ ແລະ ອະສັງຫາລິມະຊັບ;

9. **ທຶນທີ່ເປັນຊັບສິນບໍ່ມີຕົວຕົນ** ໝາຍເຖິງ ຊັບສິນທາງປັນຍາ, ລາຍຮັບທີ່ຈະເກີດຂຶ້ນໃນອະນາຄົດ, ສິດເຊົ່າ, ສິດທາງດ້ານການຄ້າ ແລະ ມູນຄ່າການ

ສໍາປະທານ;

10. **ສັນຍາສໍາປະທານ** ໝາຍເຖິງ ສັນຍາທີ່ເຊັນ ລະຫວ່າງ ນິຕິບຸກຄົນ ກັບອົງການຂອງລັດ ທີ່ໄດ້ຮັບມອບໝາຍ ເພື່ອໃຫ້ສິດໃນການດໍາເນີນທຸລະກິດ ຫຼື ການພັດທະນາໂຄງການໃດໜຶ່ງ ພາຍໃຕ້ກົດໝາຍຂອງ ສປປ ລາວ;

11. **ບົດບັນທຶກຄວາມເຂົ້າໃຈ** ໝາຍເຖິງ ເອກະສານບັນທຶກການຕົກລົງ ລະຫວ່າງ ນິຕິບຸກຄົນ ກັບ ອົງການຂອງລັດ ທີ່ໄດ້ຮັບມອບໝາຍ ເພື່ອໃຫ້ສິດໃນການສຶກສາຄວາມເປັນໄປໄດ້ຂອງໂຄງການ;

12. **ພາຫະນະຮັບໃຊ້ການຜະລິດໂດຍກົງ** ໝາຍເຖິງ ກົນຈັກ ແລະ ຍານພາຫະນະ ທີ່ນໍາໃຊ້ໂດຍກົງເຂົ້າໃນການດໍາເນີນກິດຈະການການລົງທຶນ;

13. **ການລົງທຶນທາງກົງ** ໝາຍເຖິງ ການນໍາເອົາທຶນ ເຂົ້າໃນການດໍາເນີນທຸລະກິດ ຊຶ່ງເຮັດໃຫ້ ຜູ້ລົງທຶນກາຍເປັນເຈົ້າຂອງວິສາຫະກິດ, ຄຸ້ມຄອງບໍລິຫານ ຫຼື ຂະຫຍາຍວິສາຫະກິດຂອງຕົນ;

14. **ວັນລັດຖະການ** ໝາຍເຖິງ ວັນເຮັດວຽກຕາມປະຕິທິນ ຂອງ ສປປ ລາວ;

15. **ຄະນະຄຸ້ມຄອງເຂດ** ໝາຍເຖິງ ຫົວໜ່ວຍການຈັດຕັ້ງ ທີ່ສ້າງຕັ້ງຂຶ້ນໂດຍອົງການຂອງລັດ ເພື່ອສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຊຶ່ງໄດ້ຮັບການອະນຸຍາດໃຫ້ສ້າງຕັ້ງຢູ່ບັນດາ ແຂວງ, ນະຄອນຫຼວງ;

16. **ການເຊົ່າ** ໝາຍເຖິງ ການຕົກລົງລະຫວ່າງ ຜູ້ເຊົ່າກັບຜູ້ໃຫ້ເຊົ່າທີ່ດິນ ເພື່ອນໍາໃຊ້ທີ່ດິນເຂົ້າໃນກິດຈະການໃດໜຶ່ງ ຕາມສັນຍາ ແລະ ກົດໝາຍ ເປັນຕົ້ນ ການຄ້າ, ການບໍລິການ, ບ່ອນຢູ່ອາໄສ, ການທ່ອງທ່ຽວ, ການກິລາ, ການທູດ, ການຈັດຕັ້ງສາກົນ;

17. **ການສໍາປະທານ** ໝາຍເຖິງ ການອະນຸຍາດຂອງລັດໃຫ້ຜູ້ຂໍສໍາປະທານທີ່ດິນ ນໍາໃຊ້ທີ່ດິນໃນພື້ນທີ່ໃດໜຶ່ງ ທີ່ລັດໄດ້ຈັດສັນ ເພື່ອດໍາເນີນກິດຈະການ ການລົງທຶນສໍາປະທານຕາມສັນຍາ ແລະ ກົດໝາຍ ເປັນຕົ້ນ ໃນຂະແໜງກະສິກໍາ, ປູກໄມ້, ແຫຼ່ງທ່ອງທ່ຽວ, ເຂດອຸດສາຫະກໍາ ຫຼື ນິຄົມອຸດສາຫະກໍາ, ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ການພັດທະນາເປັນຕົວເມືອງໃໝ່, ການພັດທະນາແຫຼ່ງພະລັງງານໄຟຟ້າ, ການຂຸດຄົ້ນບໍ່ແຮ່;

18. **ບັນຊີຮຽກການລົງທຶນ** ໝາຍເຖິງ ບັນດາໂຄງການລົງທຶນ ໃນກິດ

ຈະການທົ່ວໄປ ແລະ ກິດຈະການສຳປະທານ ທີ່ຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄວ້າ ແລະ ສ້າງຂຶ້ນ ເພື່ອເປັນຂໍ້ມູນໃນການດຶງດູດການລົງທຶນຢ່າງມີຈຸດສຸມ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານສົ່ງເສີມການລົງທຶນ**

ລັດ ສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂອຳນວຍຄວາມສະດວກຕ່າງໆ ເປັນຕົ້ນ ການກໍ່ສ້າງໂຄງລ່າງພື້ນຖານ, ການສະໜອງ ຂໍ້ມູນ ຂ່າວສານ ທີ່ຈຳເປັນ, ການໃຫ້ນະໂຍບາຍດ້ານພາສີ, ອາກອນ, ດ້ານແຮງງານ, ການໃຫ້ສິດນຳໃຊ້ທີ່ດິນ, ການນຳໃຊ້ແຫຼ່ງນ້ຳ, ການເຂົ້າເຖິງແຫຼ່ງທຶນ, ການປະຕິບັດຄວາມສະເໝີພາບ ລວມທັງການຮັບຮູ້, ການປົກປ້ອງກຳມະສິດ ກ່ຽວກັບ ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດສືບທອດ, ສິດໂອນ ແລະ ສິດອື່ນ ຕາມທີ່ກົດໝາຍກຳນົດໄວ້.

ລັດ ສົ່ງເສີມໃຫ້ລົງທຶນເຂົ້າໃສ່ທຸກຂະແໜງ, ກິດຈະການ ແລະ ທຸກເຂດໃນທົ່ວປະເທດ, ເວັ້ນເສຍແຕ່ ເຂດ ແລະ ກິດຈະການ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງ ຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທຳອັນດີງາມຂອງຊາດ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານສົ່ງເສີມການລົງທຶນ**

ວຽກງານສົ່ງເສີມການລົງທຶນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍໃນການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ແນວທາງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ, ເຂດ, ເຂດແຄວ້ນ, ສະພາບຈຸດພິເສດທາງດ້ານທີ່ຕັ້ງ ແລະ ການຂະຫຍາຍເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

2. ສົມທົບແໜ້ນ ກັບການເພີ່ມທະວີການຄຸ້ມຄອງຂອງລັດຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມີການມອບສິດ ແລະ ແບ່ງຂັ້ນຄຸ້ມຄອງ ໃຫ້ທ້ອງຖິ່ນ;

3. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ລັດ, ລວມໝູ່,

ປະຊາຊົນ ແລະ ຜູ້ລົງທຶນ;

4. ຮັບປະກັນການບໍລິການການລົງທຶນປະຕູດຽວ ໃຫ້ສະດວກ, ກະທັດຮັດ, ວ່ອງໄວ, ໂປ່ງໃສ ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍ;

5. ຮັບປະກັນການແຂ່ງຂັນທາງທຸລະກິດທີ່ເປັນທຳ;

6. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ, ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ຢ່າງມີປະສິດທິຜົນຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນ ຫຼື ພົວພັນກັບການລົງທຶນ ຢູ່ ສປປ ລາວ ແລະ ຜູ້ລົງທຶນ ຢູ່ ສປປ ລາວ ທີ່ມີຈຸດປະສົງອອກໄປລົງທຶນ ຢູ່ຕ່າງປະເທດ.

### ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມການລົງທຶນ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ ແລະ ປະສົບການ ດ້ານການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ການຕະຫຼາດ, ການຄ້າ, ແຫຼ່ງທຶນ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

# ພາກທີ II
# ນະໂຍບາຍສົ່ງເສີມ, ຊ່ວຍໜູນ ແລະ ການປົກປ້ອງການລົງທຶນ

## ໝວດທີ 1
## ນະໂຍບາຍສົ່ງເສີມການລົງທຶນ

### ມາດຕາ 8 (ປັບປຸງ) ນະໂຍບາຍສົ່ງເສີມການລົງທຶນ

ນະໂຍບາຍສົ່ງເສີມການລົງທຶນ ແມ່ນ ການໃຫ້ນະໂຍບາຍດ້ານ ອາກອນ, ພາສີ, ນະໂຍບາຍສົ່ງເສີມດ້ານການ ເຊົ່າ ຫຼື ສຳປະທານ ທີ່ດິນຂອງລັດ ແລະ ນະ

ໂຍບາຍຊ່ວຍໜູນການລົງທຶນຕາມ ຂະແໜງການ ແລະ ເຂດ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ 10 ຂອງກົດໝາຍສະບັບນີ້.

ການລົງທຶນທີ່ຈະໄດ້ຮັບນະໂຍບາຍສົ່ງເສີມ ປະກອບດ້ວຍ ການລົງທຶນໃນກິດຈະການທົ່ວໄປ ລວມທັງກິດຈະການທີ່ຢູ່ໃນບັນຊີຄວບຄຸມ ແລະ ບໍ່ຢູ່ໃນບັນຊີຄວບຄຸມ, ກິດຈະການສຳປະທານ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

**ມາດຕາ 9 (ປັບປຸງ) ການລົງທຶນໃນກິດຈະການຕາມຂະແໜງການ**

ການລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ຮັບນະໂຍບາຍສົ່ງເສີມ ມີ ດັ່ງນີ້:

1. ກະສິກຳສະອາດ, ການຜະລິດແນວພັນພືດ, ແນວພັນສັດ, ການປູກພືດອຸດສາຫະກຳ, ການພັດທະນາປ່າໄມ້, ການປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນານາພັນ;

2. ອຸດສາຫະກຳ ປຸງແຕ່ງຜະລິດຕະພັນກະສິກຳ ແລະ ປຸງແຕ່ງຂະແໜງການອື່ນ ທີ່ເປັນມິດຕໍ່ສິ່ງແວດລ້ອມ, ການຜະລິດອາຫານສັດ, ຝຸ່ນທຳມະຊາດ, ຝຸ່ນຊີວະພາບ, ຝຸ່ນວິທະຍາສາດ ແລະ ປັດໄຈການຜະລິດກະສິກຳອື່ນ, ຫັດຖະກຳທີ່ເປັນມູນເຊື້ອເອກະລັກຂອງຊາດ, ຜະລິດຕະພັນໜຶ່ງເມືອງໜຶ່ງຜະລິດຕະພັນ, ການຜະລິດສິນຄ້າ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ;

3. ໂຮງໝໍ, ໂຮງງານຜະລິດຢາ ແລະ ອຸປະກອນການແພດ, ການຜະລິດ ແລະ ປິ່ນປົວດ້ວຍຢາພື້ນເມືອງ;

4. ການສຶກສາ, ການກິລາ-ກາຍຍະກຳ, ການພັດທະນາສີມືແຮງງານ ແລະ ການຜະລິດອຸປະກອນຮັບໃຊ້ການສຶກສາ ແລະ ກິລາ;

5. ການນຳໃຊ້ເຕັກໂນໂລຊີດີຈີຕອນ, ການຄົ້ນຄວ້າ ແລະ ການພັດທະນາວິທະຍາສາດ, ການນຳໃຊ້ນະວັດຕະກຳ ທີ່ເປັນມິດກັບສິ່ງແວດລ້ອມ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ;

6. ການພັດທະນາອຸດສາຫະກຳທ່ອງທ່ຽວທາງດ້ານ ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງ;

7. ການລົງທຶນ, ການບໍລິການ ແລະ ການພັດທະນາໂຄງລ່າງພື້ນຖານສາທາລະນະປະໂຫຍດ ເປັນຕົ້ນ ການກໍ່ສ້າງທາງຫຼວງ ແລະ ທາງລົດໄຟ, ການສະ

ໜອງນ້ຳ, ການບຳບັດນ້ຳເປື້ອນ, ການບໍລິຫານຈັດການສິ່ງເສດເຫຼືອ;

8. ການພັດທະນາລະບົບໂຄງລ່າງພື້ນຖານ ເພື່ອຮອງຮັບການລົງທຶນເຂົ້າໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ;

9. ການບໍລິການ ໂລຊິດສະຕິກ, ຂົນສົ່ງສິນຄ້າ, ລະບົບສາງສິນຄ້າຜ່ານແດນ ແລະ ທ່າບົກ, ການບໍລິການທາງຜ່ານ ແລະ ທາງເຊື່ອມໂຍງລະຫວ່າງປະເທດ, ການຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ທາງບົກ, ທາງນ້ຳ, ທາງລົດໄຟ ແລະ ທາງອາກາດ.

ລັດຖະບານ ເປັນຜູ້ກຳນົດບັນຊີລະອຽດກ່ຽວກັບກິດຈະການຕາມຂະແໜງການ ທີ່ໄດ້ຮັບນະໂຍບາຍສົ່ງເສີມ ໃນລະບຽບການຕ່າງຫາກ.

## ມາດຕາ 10 (ປັບປຸງ) ການລົງທຶນຕາມເຂດ

ການລົງທຶນຕາມເຂດ ທີ່ໄດ້ຮັບນະໂຍບາຍສົ່ງເສີມ ມີ ດັ່ງນີ້:

ເຂດ 1: ເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ;

ເຂດ 2: ເຂດທີ່ມີໂຄງລ່າງພື້ນຖານເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ.

ລັດຖະບານ ເປັນຜູ້ກຳນົດ ແລະ ປະເມີນ ເຂດ ໃນທຸກ ຫ້າປີ.

## ມາດຕາ 11 (ປັບປຸງ) ນະໂຍບາຍດ້ານອາກອນກຳໄລ ໃນກິດຈະການຕາມຂະແໜງການ ແລະ ເຂດ

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການຕາມຂະແໜງການ ແລະ ເຂດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ ມາດຕາ 10 ຂອງກົດໝາຍສະບັບນີ້ ຈະໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລ ດັ່ງນີ້:

1. ການລົງທຶນຢູ່ເຂດ 1: ໄດ້ຮັບການຍົກເວັ້ນອາກອນກຳໄລ ໃນໄລຍະເວລາສູງສຸດບໍ່ເກີນ ສິບປີ. ສຳລັບການລົງທຶນໃນກິດຈະການຕາມຂະແໜງການທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂໍ້ 1, 2 ແລະ ຂໍ້ 3 ຂອງ ກົດໝາຍສະບັບນີ້ ຈະໄດ້ຮັບການຍົກເວັ້ນ ເພີ່ມອີກສູງສຸດບໍ່ເກີນ ຫ້າປີ, ສຳລັບການລົງທຶນ ໃນຂະແໜງການສຶກສາ ໄດ້ຮັບການຍົກເວັ້ນອາກອນກຳໄລ ຕະຫຼອດໄລຍະການລົງທຶນ;

2. ການລົງທຶນຢູ່ເຂດ 2: ໄດ້ຮັບການຍົກເວັ້ນອາກອນກຳໄລໃນໄລຍະ

ເວລາສູງສຸດບໍ່ເກີນ ສີ່ປີ. ສໍາລັບການລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂໍ້ 1, 2 ແລະ ຂໍ້ 3 ຂອງກົດໝາຍສະບັບນີ້ ຈະໄດ້ຮັບການຍົກເວັ້ນ ເພີ່ມອີກສູງສຸດບໍ່ເກີນ ສາມປີ, ສໍາລັບການລົງທຶນໃນຂະແໜງການສຶກສາ ໄດ້ຮັບການຍົກເວັ້ນອາກອນກໍາໄລ ຕະຫຼອດໄລຍະການລົງທຶນ.

ໄລຍະການຍົກເວັ້ນອາກອນກໍາໄລ ໃຫ້ນັບແຕ່ປີທີ່ວິສາຫະກິດ ມີລາຍຮັບຈາກການດໍາເນີນທຸລະກິດ ຫຼື ມີລາຍໄດ້ ເປັນຕົ້ນໄປ.

ຫຼັງຈາກສິ້ນສຸດ ໄລຍະການຍົກເວັ້ນອາກອນກໍາໄລ ຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້ແລ້ວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍອາກອນລາຍໄດ້.

ລັດຖະບານ ເປັນຜູ້ກໍານົດລະບຽບການ ແລະ ຂັ້ນຕອນລະອຽດ ໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການຍົກເວັ້ນອາກອນກໍາໄລ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ມາດຕາ 12 (ປັບປຸງ) ນະໂຍບາຍສົ່ງເສີມດ້ານ ພາສີ, ອາກອນລາຍໄດ້ ແລະ ອາກອນມູນຄ່າເພີ່ມ

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການຕາມຂະແໜງການ ແລະ ເຂດ ຈະໄດ້ຮັບນະໂຍບາຍດ້ານພາສີ ດັ່ງນີ້:

1. ການນໍາເຂົ້າ ວັດຖຸປະກອບ ທີ່ບໍ່ສາມາດສະໜອງໄດ້ພາຍໃນປະເທດ ເພື່ອສ້າງເປັນຊັບສົມບັດຄົງທີ່ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດໂດຍກົງ ຈະໄດ້ຮັບການຍົກເວັ້ນພາສີ. ສ່ວນການນໍາເຂົ້າ ນໍ້າມັນເຊື້ອໄຟ, ອາຍແກັສ, ນໍ້າມັນຫຼໍ່ລື່ນ, ທາດເຄມີ, ພາຫະນະຮັບໃຊ້ບໍລິຫານ ແລະ ວັດຖຸປະກອບອື່ນ ລວມທັງການນໍາເຂົ້າຊົ່ວຄາວພາຫະນະກົນຈັກ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ;

2. ການນໍາເຂົ້າ ວັດຖຸດິບ, ແຮ່ທາດ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດເພື່ອສົ່ງອອກ ຈະໄດ້ຮັບການງົດເກັບພາສີ;

3. ການນໍາເຂົ້າ ວັດຖຸດິບ, ແຮ່ທາດ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດແລ້ວຈໍາໜ່າຍພາຍໃນ ເພື່ອທົດແທນການນໍາເຂົ້າ ຈະໄດ້ຮັບການຍົກເວັ້ນພາສີ;

4. ການສົ່ງອອກຜະລິດຕະພັນກະສິກໍາ ທີ່ໄດ້ຈາກ ການຜະລິດ, ການປູກ ແລະ ການລ້ຽງ, ສິນຄ້າອຸດສາຫະກໍາທີ່ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງ ເປັນຜະລິດຕະພັນສໍາເລັດຮູບ, ຜະລິດຕະພັນຫັດຖະກໍາ ຈະໄດ້ຮັບການຍົກເວັ້ນພາສີ

ຂາອອກ, ເວັ້ນເສຍແຕ່ບາງລາຍການ ສິນຄ້າ, ເຄື່ອງຂອງ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ໃນແຕ່ລະໄລຍະ.

ຜູ້ຊ່ຽວຊານ ໃນຂະແໜງການທີ່ໄດ້ຮັບການສົ່ງເສີມ ຈະໄດ້ຮັບນະໂຍບາຍເສຍອາກອນລາຍໄດ້ບຸກຄົນ ໃນອັດຕາ ຫ້າສ່ວນຮ້ອຍ (5%), ສ່ວນເປົ້າໝາຍ ແລະ ເງື່ອນໄຂຂອງຜູ້ຈະໄດ້ຮັບນະໂຍບາຍດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ສຳລັບນະໂຍບາຍດ້ານອາກອນມູນຄ່າເພີ່ມ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ.

## ມາດຕາ 13 ນະໂຍບາຍເຂົ້າເຖິງແຫຼ່ງທຶນ

ຜູ້ລົງທຶນ ໄດ້ຮັບນະໂຍບາຍເຂົ້າເຖິງແຫຼ່ງທຶນ ດ້ວຍການກູ້ຢືມເງິນນຳທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ຢູ່ ສປປ ລາວ ແລະ ຕ່າງປະເທດ ຕາມກົດໝາຍທີ່ກ່ຽວຂ້ອງ.

## ມາດຕາ 14 (ປັບປຸງ) ນະໂຍບາຍຂະຫຍາຍການລົງທຶນ

ຜູ້ລົງທຶນ ທີ່ນຳເອົາກຳໄລສຸດທິໄປລົງທຶນຕໍ່ ເພື່ອເພີ່ມກິດຈະການ ຫຼື ຂະຫຍາຍກິດຈະການການລົງທຶນ ຈະໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລໃນປີການບັນຊີຖັດໄປ ໜຶ່ງປີ ຕາມອັດຕາສ່ວນກຳໄລທີ່ນຳເອົາໄປລົງທຶນ ບົນພື້ນຖານການເຄື່ອນໄຫວທຸລະກິດ ທີ່ສອດຄ່ອງກັບກົດໝາຍ ແລະ ໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ.

ຜູ້ລົງທຶນ ທີ່ມີການຂາດທຶນຈາກການດຳເນີນທຸລະກິດ ສາມາດຍົກຍອດເງິນຂາດທຶນໃນປີ ໄປຫັກອອກຈາກກຳໄລຂອງປີການບັນຊີຖັດໄປ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບ ການຂະຫຍາຍການລົງທຶນ ແລະ/ຫຼື ຂະຫຍາຍກິດຈະການ ດ້ວຍການລົງທຶນເພີ່ມ ກໍຈະໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ມາດຕານີ້.

**ມາດຕາ 15 (ປັບປຸງ) ນະໂຍບາຍຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານ ທີ່ດິນຂອງລັດ**

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງກົດໝາຍສະບັບນີ້ ໄດ້ຮັບນະໂຍບາຍຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ ດັ່ງນີ້:

1. ການລົງທຶນຢູ່ເຂດ 1 ໄດ້ຮັບການຍົກເວັ້ນໃນໄລຍະສູງສຸດບໍ່ເກີນ ສິບປີ, ສຳລັບການລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂໍ້ 1, 2, 3 ແລະ ຂໍ້ 4 ຂອງກົດໝາຍສະບັບນີ້ ຈະໄດ້ຮັບຍົກເວັ້ນ ເພີ່ມອີກສູງສຸດບໍ່ເກີນ ຫ້າ ປີ;

2. ການລົງທຶນຢູ່ເຂດ 2 ໄດ້ຮັບການຍົກເວັ້ນໃນໄລຍະສູງສຸດບໍ່ເກີນ ຫ້າປີ, ສຳລັບການລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂໍ້ 1, 2, 3 ແລະ ຂໍ້ 4 ຂອງກົດໝາຍສະບັບນີ້ ຈະໄດ້ຮັບຍົກເວັ້ນ ເພີ່ມອີກສູງສຸດບໍ່ເກີນ ສາມປີ.

ລາຍລະອຽດຂອງໄລຍະເວລາການຍົກເວັ້ນຄ່າເຊົ່າ ຫຼື ສຳປະທານ ທີ່ດິນຂອງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 (ປັບປຸງ) ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນຂອງລັດ**

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການສຳປະທານ ຢູ່ ສປປ ລາວ ໄດ້ຮັບນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນຂອງລັດ ດັ່ງນີ້:

1. ຜູ້ລົງທຶນ ມີ ສິດເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ເພື່ອດຳເນີນກິດຈະການການລົງທຶນ ແລະ ສາມາດສະເໜີລັດຖະບານ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາກ່ຽວກັບການໂອນສິດນຳໃຊ້ທີ່ດິນ ທີ່ຕົນໄດ້ຮັບສິດເຊົ່າ ຫຼື ສຳປະທານ ໃນຂອບເຂດອາຍຸເຊົ່າ ຫຼື ສຳປະທານທີ່ຍັງເຫຼືອ ພາຍຫຼັງໄດ້ລົງທຶນ ແລະ ໄດ້ປະຕິບັດໜ້າວຽກສຳເລັດ ຫຼາຍກວ່າ ຫ້າສິບສ່ວນຮ້ອຍ (50%) ຂອງແຜນແມ່ບົດພັດທະນາໂຄງການ, ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດທີ່ຖືກຮັບຮອງ ໂດຍຜ່ານການປະເມີນຈາກຂະແໜງການທີ່ກ່ຽວຂ້ອງ ແລະ ໄດ້ປະຕິບັດພັນທະຕາມ ສັນຍາເຊົ່າ ຫຼື ສຳປະທານ ແລະ ພັນທະອື່ນ ຢ່າງຄົບຖ້ວນ. ສຳລັບທີ່ດິນທີ່ຍັງບໍ່ໄດ້ຮັບການພັດທະນາ ຫຼື ນຳໃຊ້ບໍ່ຖືກຕາມຈຸດປະສົງຂອງການເຊົ່າ ຫຼື ສຳປະທານ ຕ້ອງສົ່ງຄືນໃຫ້ລັດ ໂດຍບໍ່ມີເງື່ອນໄຂ

ແລະ ຕ້ອງຟື້ນຟູເນື້ອທີ່ດິນຄືນ;

2. ຜູ້ລົງທຶນ ມີສິດນໍາໃຊ້ທີ່ດິນ ທີ່ໄດ້ຮັບອະນຸຍາດໃຫ້ ເຊົ່າ ຫຼື ສໍາປະທານ ທີ່ດິນຂອງລັດ ເພື່ອໃຊ້ສະເພາະປຸກສ້າງສໍານັກງານຫ້ອງການ ແລະ ທີ່ຢູ່ອາໄສ ຕາມກໍານົດເວລາຂອງການລົງທຶນ. ນອກຈາກນີ້ຍັງມີສິດ ເຊົ່າ ຫຼື ສໍາປະທານ ຕາມການຕົກລົງຂອງຄະນະກໍາມະການປົກຄອງຂັ້ນແຂວງ.

ລັດຖະບານ ເປັນຜູ້ກໍານົດລະບຽບການໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມດ້ານການນໍາໃຊ້ທີ່ດິນຂອງລັດ.

## ໝວດທີ 2
## ນະໂຍບາຍຊ່ວຍໜູນການລົງທຶນ

### ມາດຕາ 17 ນະໂຍບາຍຊ່ວຍໜູນການລົງທຶນ

ນະໂຍບາຍຊ່ວຍໜູນການລົງທຶນ ມີ ດັ່ງນີ້:

1. ນະໂຍບາຍດ້ານ ຂໍ້ມູນ ຂ່າວສານ;
2. ນະໂຍບາຍຊ່ວຍໜູນອື່ນ.

### ມາດຕາ 18 ນະໂຍບາຍດ້ານ ຂໍ້ມູນ ຂ່າວສານ

ເພື່ອຮັບປະກັນໃຫ້ຜູ້ລົງທຶນໄດ້ຮັບ ຂໍ້ມູນ ຂ່າວສານ ກ່ຽວກັບການລົງທຶນຢ່າງຄົບຖ້ວນ ເອກະພາບ, ວ່ອງໄວ, ທັນການ ແລະ ສາມາດຕັດສິນໃຈລົງທຶນໄດ້ນັ້ນ ໃຫ້ມີສູນ ຂໍ້ມູນ ຂ່າວສານ ການລົງທຶນ ຢູ່ໃນຫ້ອງການບໍລິການການລົງທຶນປະຕູດຽວທີ່ກ່ຽວຂ້ອງ.

ສູນ ຂໍ້ມູນ ຂ່າວສານ ການລົງທຶນ ເປັນຜູ້ເກັບກໍາ ແລະ ສັງລວມບັນດາຂໍ້ມູນກ່ຽວກັບການລົງທຶນ ເພື່ອສ້າງເຄືອຂ່າຍ, ສະໜອງ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ ເປັນຕົ້ນ ການໂຄສະນາຜ່ານລະບົບເວັບໄຊສ໌, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ອື່ນໆ ກ່ຽວກັບການລົງທຶນ ໃຫ້ຜູ້ມີຄວາມສົນໃຈ, ສະຖານທູດ, ກົງສຸນລາວ ຫຼື ຫ້ອງການຜູ້ຕາງໜ້າທາງດ້ານການຄ້າລາວ ປະຈໍາຢູ່ຕ່າງປະເທດເພື່ອສະໜອງໃຫ້ຜູ້ຕ້ອງການມາລົງທຶນ.

**ມາດຕາ 19 (ປັບປຸງ) ນະໂຍບາຍຊ່ວຍໜູນອື່ນ**

ຜູ້ລົງທຶນ ໄດ້ຮັບນະໂຍບາຍຊ່ວຍໜູນອື່ນ ດັ່ງນີ້:

1. ໄດ້ຮັບການພິຈາລະນາຍ້ອງຍໍຈາກລັດ ດ້ວຍຫຼາຍຮູບແບບທີ່ເໝາະສົມສໍາລັບຜູ້ລົງທຶນທີ່ໄດ້ປະຕິບັດພັນທະຕໍ່ລັດຢ່າງຄົບຖ້ວນ, ທັນເວລາ, ປະກອບສ່ວນພັດທະນາຊຸມຊົນ, ສັງຄົມ, ເອົາໃຈໃສ່ແກ້ໄຂບັນຫາສິ່ງແວດລ້ອມ, ພັດທະນາສີມືແຮງງານລາວ ໂດຍມີການຢັ້ງຢືນຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

2. ໄດ້ຮັບຄວາມສະດວກໃນການຂໍບັດອະນຸຍາດພັກເຊົາ ແລະ ວິຊາທຸລະກິດເຂົ້າ-ອອກ ຫຼາຍເທື່ອ ສໍາລັບຜູ້ລົງທຶນຕ່າງປະເທດ ຕາມໄລຍະເວລາຂອງການລົງທຶນ.

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍ ສະມາຊິກຄອບຄົວ, ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ທີ່ກ່ຽວຂ້ອງກັບການລົງທຶນ ໄດ້ຮັບຄວາມສະດວກ ໃນການເຂົ້າ-ອອກ ສປປ ລາວ ລວມທັງການຂໍວິຊາເຂົ້າ-ອອກຫຼາຍເທື່ອ ຊຶ່ງແຕ່ລະຄັ້ງບໍ່ເກີນ ຫ້າປີ ແລະ ຜູ້ລົງທຶນທີ່ມີເງື່ອນໄຂຄົບຖ້ວນຕາມລະບຽບການ ສາມາດສະເໜີຂໍພົນລະເມືອງກິດຕິມະສັກໄດ້.

ກໍລະນີ ມີຄວາມຈໍາເປັນຕ້ອງໃຫ້ນະໂຍບາຍສົ່ງເສີມພິເສດເພີ່ມຕື່ມ ໃນບາງກິດຈະການຕາມຂະແໜງການ, ບາງເຂດນັ້ນ ລັດຖະບານນໍາສະເໜີຕໍ່ ຄະນະປະຈໍາສະພາແຫ່ງຊາດ ຫຼື ສະພາແຫ່ງຊາດ ພິຈາລະນາ.

ລັດຖະບານ ເປັນຜູ້ກໍານົດລະບຽບການຈັດຕັ້ງປະຕິບັດນະໂຍບາຍຊ່ວຍໜູນອື່ນສໍາລັບຜູ້ລົງທຶນ.

**ມາດຕາ 20 (ປັບປຸງ) ການຈັດຕັ້ງປະຕິບັດການໃຫ້ນະໂຍບາຍສົ່ງເສີມ**

ບຸກຄົນ, ນິຕິບຸກຄົນ ທີ່ມີເງື່ອນໄຂໄດ້ຮັບນະໂຍບາຍສົ່ງເສີມ ແລະ ຊ່ວຍໜູນ ການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ສາມາດຍື່ນຄໍາຮ້ອງຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອສະເໜີຂໍໃບສົ່ງເສີມການລົງທຶນ.

ລັດຖະບານ ເປັນຜູ້ກໍານົດ ເງື່ອນໄຂ, ຂັ້ນຕອນ ແລະ ກໍານົດເວລາ ໃນການໃຫ້ນະໂຍບາຍສົ່ງເສີມ ໃນລະບຽບການຕ່າງຫາກ.

## ໝວດທີ 3
## ການປົກປ້ອງການລົງທຶນ

**ມາດຕາ 21 ການປົກປ້ອງການລົງທຶນ**

ລັດ ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ແລະ ສິດສະເໝີພາບ ຂອງຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ພາຍໃຕ້ກົດໝາຍຂອງ ສປປ ລາວ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 22 (ປັບປຸງ) ຮູບການການປົກປ້ອງການລົງທຶນ**

ລັດ ຮັບຮູ້ ແລະ ປົກປ້ອງການລົງທຶນ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ລົງທຶນຢ່າງເຕັມສ່ວນ ໂດຍບໍ່ຖືກເກັບເກນ, ບໍ່ຖືກຍຶດ ຫຼື ໂອນຊັບສິນຂອງຜູ້ລົງທຶນມາເປັນຂອງລັດ ດ້ວຍວິທີການທາງດ້ານບໍລິຫານ.

ໃນກໍລະນີທີ່ລັດຖະບານ ມີຄວາມຈຳເປັນນຳໃຊ້ຊັບສິນຂອງຜູ້ລົງທຶນ ໃນເຂດໂຄງການ ເພື່ອສາທາລະນະປະໂຫຍດ ຜູ້ລົງທຶນຈະໄດ້ຮັບຄ່າທົດແທນຄືນຕາມມູນຄ່າຕົວຈິງທີ່ໄດ້ລົງທຶນ ຕາມລາຄາຕະຫຼາດ ໃນເວລາມອບໂອນ ແລະ ດ້ວຍວິທີການຊຳລະທີ່ຕົກລົງກັນ.

**ມາດຕາ 23 ການປົກປ້ອງຊັບສິນທາງປັນຍາ**

ລັດ ຮັບຮູ້ ແລະ ປົກປ້ອງຊັບສິນທາງປັນຍາຂອງຜູ້ລົງທຶນ ທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາຂອງ ສປປ ລາວ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ III
## ການເຄື່ອນໄຫວການລົງທຶນ

**ມາດຕາ 24 ການເຄື່ອນໄຫວການລົງທຶນ**

ການເຄື່ອນໄຫວການລົງທຶນ ແມ່ນ ການດຳເນີນກິດຈະການການລົງທຶນຕາມຮູບການ, ປະເພດກິດຈະການ, ເງື່ອນໄຂ, ຂັ້ນຕອນ, ທຶນຈົດທະບຽນ ແລະ ການນຳເຂົ້າທຶນ.

## ໝວດທີ 1
## ຮູບການ ແລະ ປະເພດກິດຈະການ ການລົງທຶນ

**ມາດຕາ 25 ຮູບການ ການລົງທຶນ**

ການລົງທຶນ ປະກອບດ້ວຍ ຮູບການ ດັ່ງນີ້:

1. ການລົງທຶນຝ່າຍດຽວຂອງຜູ້ລົງທຶນ ພາຍໃນ ຫຼື ຕ່າງປະເທດ;
2. ການລົງທຶນຮ່ວມລະຫວ່າງຜູ້ລົງທຶນ ພາຍໃນ ກັບ ຕ່າງປະເທດ;
3. ການລົງທຶນທຸລະກິດຮ່ວມຕາມສັນຍາ;
4. ການລົງທຶນຮ່ວມລະຫວ່າງ ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ;
5. ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ.

ລັດຖະບານ ສາມາດເຂົ້າຖືຮຸ້ນໃນກິດຈະການສໍາປະທານ ຕາມແຕ່ລະກໍລະນີ ທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 26 ການລົງທຶນຝ່າຍດຽວຂອງຜູ້ລົງທຶນ ພາຍໃນ ຫຼື ຕ່າງປະເທດ**

ການລົງທຶນຝ່າຍດຽວຂອງຜູ້ລົງທຶນ ພາຍໃນ ຫຼື ຕ່າງປະເທດ ແມ່ນ ການລົງທຶນຂອງຜູ້ລົງທຶນ ພາຍໃນ ຫຼື ຕ່າງປະເທດ ຝ່າຍດຽວ ຊຶ່ງອາດມີຜູ້ລົງທຶນຜູ້ດຽວ ຫຼື ຫຼາຍຄົນ ໃນກິດຈະການ ຫຼື ໂຄງການໃດໜຶ່ງ ຢູ່ ສປປ ລາວ.

**ມາດຕາ 27 (ປັບປຸງ) ການລົງທຶນຮ່ວມລະຫວ່າງ ຜູ້ລົງທຶນພາຍໃນ ກັບ ຕ່າງປະເທດ**

ການລົງທຶນຮ່ວມລະຫວ່າງຜູ້ລົງທຶນ ພາຍໃນ ກັບ ຕ່າງປະເທດ ແມ່ນ ການຮ່ວມລົງທຶນລະຫວ່າງ ຜູ້ລົງທຶນ ພາຍໃນ ກັບ ຕ່າງປະເທດ ຊຶ່ງດໍາເນີນທຸລະກິດ, ມີກໍາມະສິດຮ່ວມກັນ ແລະ ສ້າງເປັນນິຕິບຸກຄົນໃໝ່ຂຶ້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ.

ການຈັດຕັ້ງ, ການເຄື່ອນໄຫວ, ການບໍລິຫານຄຸ້ມຄອງ, ສິດ ແລະ ພັນທະຂອງຜູ້ລົງທຶນຮ່ວມ ໄດ້ກໍານົດໄວ້ໃນສັນຍາຮ່ວມທຶນ ແລະ ກົດລະບຽບ ຂອງນິຕິບຸກຄົນໃໝ່ດັ່ງກ່າວ.

**ມາດຕາ 28 (ປັບປຸງ) ການລົງທຶນທຸລະກິດຮ່ວມຕາມສັນຍາ**

ການລົງທຶນທຸລະກິດຮ່ວມຕາມສັນຍາ ແມ່ນ ການດຳເນີນທຸລະກິດໃດໜຶ່ງ ຮ່ວມລະຫວ່າງນິຕິບຸກຄົນຕ່າງປະເທດກັບນິຕິບຸກຄົນພາຍໃນ ລວມທັງພາກລັດ ແລະ ເອກະຊົນ ໂດຍມີສັນຍາຮ່ວມທຸລະກິດນຳກັນ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ແລະ ບໍ່ຈຳເປັນຕ້ອງສ້າງຕັ້ງເປັນນິຕິບຸກຄົນໃໝ່ ຫຼື ສາຂາຂຶ້ນ ຢູ່ ສປປ ລາວ. ສັນຍາດັ່ງກ່າວ ຕ້ອງກຳນົດສິດ, ພັນທະ ແລະ ຜົນປະໂຫຍດຂອງແຕ່ລະຝ່າຍຕໍ່ ກັນ ແລະ ກັນ ແລະ ຕໍ່ລັດຖະບານ ຢ່າງຈະແຈ້ງ. ພາຍຫຼັງໄດ້ລົງນາມໃນສັນຍາຮ່ວມທຸລະກິດ ຕ້ອງແຈ້ງໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອຄຸ້ມຄອງ ແລະ ຕິດຕາມ ຕາມລະບຽບການ ແລະ ຕ້ອງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານຂອງ ສປປ ລາວ ຕາມກົດໝາຍ.

**ມາດຕາ 29 ການລົງທຶນຮ່ວມລະຫວ່າງ ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ**

ການລົງທຶນຮ່ວມລະຫວ່າງ ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ແມ່ນ ການຮ່ວມລົງທຶນລະຫວ່າງ ລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ເພື່ອດຳເນີນທຸລະກິດ, ມີກຳມະສິດຮ່ວມກັນ ແລະ ສ້າງເປັນນິຕິບຸກຄົນໃໝ່ ພາຍໃຕ້ກົດໝາຍ ຂອງ ສປປ ລາວ.

ການຈັດຕັ້ງ, ການເຄື່ອນໄຫວ, ການບໍລິຫານຄຸ້ມຄອງ, ສິດ ແລະ ພັນທະຂອງຜູ້ລົງທຶນຮ່ວມລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ໄດ້ກຳນົດໄວ້ໃນສັນຍາຮ່ວມທຶນ ແລະ ກົດລະບຽບຂອງນິຕິບຸກຄົນໃໝ່ດັ່ງກ່າວ.

**ມາດຕາ 30 ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ກິດຈະການຮ່ວມລົງທຶນລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາຍໃຕ້ສັນຍາຮ່ວມລົງທຶນ ເພື່ອຈັດຕັ້ງປະຕິບັດໂຄງການກໍ່ສ້າງໃໝ່, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການສາທາລະນະ.

ຂະແໜງການ, ເງື່ອນໄຂ ແລະ ຂັ້ນຕອນ ການລົງທຶນໃນຮູບການ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 (ປັບປຸງ) ປະເພດກິດຈະການ ການລົງທຶນ**

ກິດຈະການ ການລົງທຶນ ມີ ສອງປະເພດ ດັ່ງນີ້:

1. ກິດຈະການ ການລົງທຶນທົ່ວໄປ;
2. ກິດຈະການ ການລົງທຶນສຳປະທານ.

ບັນດາຂະແໜງການ ແລະ ທ້ອງຖິ່ນ ເປັນເຈົ້າການຄົ້ນຄວ້າສ້າງບັນຊີລາຍການລົງທຶນ ແຕ່ລະປະເພດກິດຈະການການລົງທຶນ ບົນພື້ນຖານຄວາມສອດຄ່ອງກັບຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂະແໜງການ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ທ້ອງຖິ່ນ ແລະ ທ່າແຮງບົ່ມຊ້ອນ ເພື່ອເປັນຂໍ້ມູນໃຫ້ຂະແໜງການແຜນການ ແລະ ການລົງທຶນ ໃນການດຶງດູດການລົງທຶນຢ່າງມີຈຸດສຸມ.

## ໝວດທີ 2
## ກິດຈະການ ການລົງທຶນທົ່ວໄປ

**ມາດຕາ 32 ປະເພດກິດຈະການ ການລົງທຶນທົ່ວໄປ**

ປະເພດກິດຈະການ ການລົງທຶນທົ່ວໄປ ມີ ດັ່ງນີ້:

1. ກິດຈະການ ໃນບັນຊີຄວບຄຸມ;
2. ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ.

**ມາດຕາ 33 (ປັບປຸງ) ກິດຈະການໃນບັນຊີຄວບຄຸມ**

ກິດຈະການໃນບັນຊີຄວບຄຸມ ແມ່ນ ປະເພດທຸລະກິດ ທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ເພື່ອຮັບປະກັນຄວາມສົມດຸນໃນການພັດທະນາບັນດາຂະແໜງການເສດຖະກິດ ແລະ ສັງຄົມ ຊຶ່ງຕ້ອງໄດ້ຜ່ານການພິຈາລະນາ ໂດຍບັນດາຂະແໜງການທີ່ກ່ຽວຂ້ອງກ່ອນການອະນຸຍາດລົງທຶນຈາກ ກະຊວງແຜນການ ແລະ ການລົງທຶນ, ຄະນະກຳມະການປົກຄອງຂັ້ນແຂວງ ຕາມການແບ່ງຂັ້ນຄຸ້ມຄອງ.

ລັດຖະບານ ເປັນຜູ້ກຳນົດກິດຈະການໃນບັນຊີຄວບຄຸມ ໃນແຕ່ລະໄລຍະ.

**ມາດຕາ 34 (ປັບປຸງ) ກິດຈະການບໍ່ຢູ່ໃນບັນຊີຄວບຄຸມ**

ກິດຈະການບໍ່ຢູ່ໃນບັນຊີຄວບຄຸມ ແມ່ນ ບັນດາກິດຈະການເປີດກວ້າງການລົງທຶນທົ່ວໄປ ທີ່ສາມາດແຈ້ງຂຶ້ນທະບຽນວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 3
## ຂັ້ນຕອນການລົງທຶນໃນກິດຈະການທົ່ວໄປ

**ມາດຕາ 35 (ປັບປຸງ) ການສະເໜີລົງທຶນໃນກິດຈະການໃນບັນຊີຄວບຄຸມ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງລົງທຶນໃນກິດຈະການໃນບັນຊີຄວບຄຸມ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລ້ວຍື່ນຄຳຮ້ອງຂໍລົງທຶນ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ. ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າແລ້ວນຳສະເໜີຕໍ່ ກະຊວງແຜນການ ແລະ ການລົງທຶນ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາຕາມການແບ່ງຂັ້ນຄຸ້ມຄອງ ທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ພາຍຫຼັງໄດ້ໃບອະນຸຍາດລົງທຶນແລ້ວ ໃຫ້ຂໍໃບອະນຸຍາດດຳເນີນທຸລະກິດນຳຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ.

**ມາດຕາ 36 (ປັບປຸງ) ກຳນົດເວລາ ພິຈາລະນາຄຳຮ້ອງຂໍລົງທຶນໃນກິດຈະການໃນບັນຊີຄວບຄຸມ**

ກຳນົດເວລາພິຈາລະນາຄຳຮ້ອງຂໍລົງທຶນໃນກິດຈະການໃນບັນຊີຄວບຄຸມ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ລົງທຶນ ໄດ້ຮັບໃບອະນຸຍາດລົງທຶນ ພາຍໃນເວລາ ຊາວຫ້າວັນ ລັດຖະການ ນັບແຕ່ວັນ ຫ້ອງການບໍລິການ ການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນ ເປັນຕົ້ນໄປ;

2. ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງສົ່ງເອກະສານຄຳຮ້ອງ

ຂໍຄຳເຫັນນຳຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ພາຍໃນເວລາ ສອງວັນ ລັດຖະການ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນແຈ້ງຕອບເປັນລາຍລັກອັກສອນ ພາຍໃນເວລາບໍ່ເກີນ ແປດວັນ ລັດຖະການ ນັບແຕ່ ວັນໄດ້ຮັບເອກະສານຄຳຮ້ອງເປັນຕົ້ນໄປ;

3. ພາຍຫຼັງມີຄຳເຫັນດີຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງຄົ້ນຄວ້າ ສະເໜີຕໍ່ກະຊວງແຜນການ ແລະ ການລົງທຶນ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ເພື່ອຂໍອອກໃບອະນຸຍາດລົງທຶນ ພາຍໃນເວລາ ຫ້າວັນ ລັດຖະການ;

4. ໃນກໍລະນີ ຄຳເຫັນຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ບໍ່ເປັນເອກະພາບກັນ ຫຼື ບໍ່ມີຄຳເຫັນຕອບມາ ຕາມເວລາທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຂອງມາດຕານີ້ ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງເປັນເຈົ້າການປະສານສົມທົບ ແລະ ຈັດກອງປະຊຸມ ເພື່ອຄົ້ນຄວ້າຮ່ວມກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລ້ວສະເໜີ ກະຊວງແຜນການ ແລະ ການລົງທຶນ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາພາຍໃນເວລາ ຫ້າວັນ ລັດຖະການ.

ໃນກໍລະນີ ຄຳຮ້ອງຂໍລົງທຶນ ບໍ່ໄດ້ຮັບການເຫັນດີນັ້ນ ຫ້ອງການບໍລິການການລົງທຶນປະຕູດຽວ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ສະເໜີຂໍລົງທຶນ ພາຍໃນເວລາ ສາມວັນ ລັດຖະການ ນັບແຕ່ວັນໄດ້ຮັບການຕົກລົງ ເປັນຕົ້ນໄປ.

**ມາດຕາ 37 (ໃໝ່) ການປ່ຽນແປງການລົງທຶນໃນກິດຈະການໃນບັນຊີຄວບຄຸມ**

ການລົງທຶນໃນກິດຈະການໃນບັນຊີຄວບຄຸມ ຈະຖືກປ່ຽນແປງໃນກໍລະນີໃດໜຶ່ງ ເຊັ່ນ ປ່ຽນແປງຈຸດປະສົງໃນການດຳເນີນທຸລະກິດ, ທຶນຈົດທະບຽນ ຊຶ່ງຜູ້ລົງທຶນ ຕ້ອງໄດ້ຮັບການເຫັນດີຈາກອົງການທີ່ອະນຸຍາດໃຫ້ດຳເນີນທຸລະກິດ ສ່ວນການປ່ຽນແປງກ່ຽວກັບຜູ້ຖືຮຸ້ນ ແລະ ອື່ນໆ ໃຫ້ປະຕິບັດຕາມກົດໝາຍ ທີ່ກ່ຽວຂ້ອງ ແລ້ວແຈ້ງປ່ຽນແປງ ໃບອະນຸຍາດລົງທຶນ ນຳຂະແໜງການແຜນການ ແລະການລົງທຶນ ແລະ ໃບທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະການຄ້າ.

**ມາດຕາ 38 (ປັບປຸງ) ການສະເໜີລົງທຶນໃນກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ**

ຜູ້ລົງທຶນ ທີ່ມີຈຸດປະສົງລົງທຶນໃນກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ ໃຫ້ຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດ ດຳເນີນທຸລະກິດນຳຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ.

ສຳລັບການລົງທຶນໃນກິດຈະການບໍ່ຢູ່ໃນບັນຊີຄວບຄຸມ ທີ່ຢູ່ໃນກິດຈະການ ຕາມຂະແໜງການທີ່ສົ່ງເສີມນັ້ນ ພາຍຫຼັງໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດແລ້ວ ຜູ້ລົງທຶນສາມາດຍື່ນຄຳຮ້ອງຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວເພື່ອຂໍໃບສົ່ງເສີມການລົງທຶນ.

**ມາດຕາ 39 (ປັບປຸງ) ການພິຈາລະນາຂຶ້ນທະບຽນວິສາຫະກິດໃນກິດຈະການບໍ່ຢູ່ໃນບັນຊີຄວບຄຸມ**

ຂັ້ນຕອນ ແລະ ກຳນົດເວລາ ການພິຈາລະນາຂຶ້ນທະບຽນວິສາຫະກິດ ແລະ ການຂໍອະນຸຍາດດຳເນີນທຸລະກິດ ໃນກິດຈະການບໍ່ຢູ່ໃນບັນຊີຄວບຄຸມ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 40 ອາຍຸການລົງທຶນໃນກິດຈະການທົ່ວໄປ**

ການລົງທຶນໃນກິດຈະການທົ່ວໄປ ບໍ່ຈຳກັດອາຍຸການລົງທຶນ, ເວັ້ນເສຍແຕ່ກິດຈະການການລົງທຶນ ທີ່ໄດ້ກຳນົດອາຍຸການລົງທຶນໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 4
## ກິດຈະການ ການລົງທຶນສຳປະທານ

**ມາດຕາ 41 (ປັບປຸງ) ກິດຈະການ ການລົງທຶນສຳປະທານ**

ກິດຈະການ ການລົງທຶນສຳປະທານ ແມ່ນ ກິດຈະການທີ່ຜູ້ລົງທຶນ ໄດ້ຮັບອະນຸຍາດໃນການສຳປະທານຈາກລັດ ຕາມກົດໝາຍ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ ເປັນຕົ້ນ ການສຳປະທານທີ່ດິນ, ການພັດທະນາເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ການຂຸດຄົ້ນບໍ່ແຮ່, ການບໍລິການສະໜາມບິນ, ເສັ້ນທາງ, ການພັດທະນາແຫຼ່ງພະລັງງານໄຟຟ້າ, ການໃຫ້ບໍລິການດ້ານເຕັກໂນໂລຊີ ແລະ ການສື່ສານ.

ໃນກິດຈະການສຳປະທານ ຍັງມີກິດຈະການສຳປະທານສະເພາະ ຊຶ່ງແມ່ນກິດຈະການລົງທຶນສຳປະທານທີ່ມີລັກສະນະຍຸດທະສາດ, ສຳປະທານສິດຂອງຊາດທີ່ມີຄວາມຈຳກັດ ແລະ ຕິດພັນກັບຄວາມໝັ້ນຄົງຂອງປະເທດຊາດ ແລະ ການສຳປະທານການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຄຸນຄ່າສູງ ແລະ ໂຄງການທີ່ກວມພື້ນທີ່ຫຼາຍແຂວງ.

ລັດຖະບານ ເປັນຜູ້ກຳນົດບັນຊີ ກິດຈະການສຳປະທານ ແລະ ກິດຈະການສຳປະທານສະເພາະ.

## ມາດຕາ 42 (ປັບປຸງ) ອາຍຸການລົງທຶນໃນກິດຈະການສຳປະທານ

ອາຍຸການລົງທຶນໃນກິດຈະການສຳປະທານ ໃຫ້ອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ເຕັກນິກຂອງກິດຈະການ ຕາມກົດໝາຍທີ່ກ່ຽວຂ້ອງ ແຕ່ສູງສຸດບໍ່ໃຫ້ເກີນ ຫ້າສິບປີ.

ອາຍຸການລົງທຶນໃນກິດຈະການສຳປະທານ ສາມາດຕໍ່ໄດ້ ໂດຍອີງຕາມຜົນການປະເມີນ ແລະ ຕາມການຕົກລົງຂອງ ລັດຖະບານ ຫຼື ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມຂອບເຂດສິດ ທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

# ໝວດທີ 5
# ເງື່ອນໄຂ ແລະ ຂັ້ນຕອນການລົງທຶນ ໃນກິດຈະການສຳປະທານ

## ມາດຕາ 43 ເງື່ອນໄຂຂອງຜູ້ລົງທຶນ ໃນກິດຈະການສຳປະທານ

ຜູ້ລົງທຶນໃນກິດຈະການສຳປະທານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;
2. ມີປະສົບການ ແລະ ໄດ້ຮັບຜົນສຳເລັດທາງດ້ານທຸລະກິດ ໂດຍມີການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ;
3. ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ;
4. ຜ່ານການປະມູນ ຕາມກົດໝາຍທີ່ກ່ຽວຂ້ອງ;
5. ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 44 (ປັບປຸງ) ຄຳຮ້ອງ ແລະ ເອກະສານປະກອບການຂໍລົງທຶນ**

ຄຳຮ້ອງ ແລະ ເອກະສານປະກອບການຂໍລົງທຶນ ມີ ດັ່ງນີ້:

1. ຄຳຮ້ອງຂໍລົງທຶນ ຕາມແບບພິມ;
2. ປະຫວັດ ແລະ ປະສົບການ ຂອງຜູ້ລົງທຶນ, ໃບທະບຽນວິສາຫະກິດ, ບັດປະຈຳຕົວ ຫຼື ສຳເນົາໜັງສືຜ່ານແດນ ແລະ ໃບແຈ້ງໂທດຂອງຜູ້ອຳນວຍການ;
3. ສັນຍາຮ່ວມທຸລະກິດ;
4. ໃບມອບສິດໃຫ້ຜູ້ຕາງໜ້າ ບັນດາຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງວິສາຫະກິດ, ໃນກໍລະນີບຸກຄົນດັ່ງກ່າວ ບໍ່ຢູ່ໃນຕຳແໜ່ງສູງສຸດຂອງບໍລິສັດ;
5. ແຜນການ ແລະ ຮູບການດຳເນີນທຸລະກິດເບື້ອງຕົ້ນ;
6. ໃບຢັ້ງຢືນຖານະການເງິນ, ແຫຼ່ງທຶນ ແລະ ບົດລາຍງານຖານະການເງິນທີ່ຜ່ານການຢັ້ງຢືນ ສອງປີ ຫຼ້າສຸດ;
7. ສຳເນົາກົດລະບຽບຂອງບໍລິສັດ;
8. ເອກະສານອື່ນ ຕາມແຕ່ລະປະເພດກິດຈະການສຳປະທານ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 45 (ປັບປຸງ) ການຍື່ນຄຳຮ້ອງຂໍເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ເພື່ອສຶກສາຄວາມເປັນໄປໄດ້ຂອງໂຄງການລົງທຶນ ໃນກິດຈະການສຳປະທານ**

ຜູ້ລົງທຶນ ທີ່ມີຈຸດປະສົງເຊັນ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ເພື່ອສຶກສາຄວາມເປັນໄປໄດ້ຂອງ ໂຄງການໃນກິດຈະການສຳປະທານສະເພາະໃຫ້ຍື່ນຄຳຮ້ອງຂໍລົງທຶນ ພ້ອມດ້ວຍເອກະສານປະກອບຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ. ສຳລັບກິດຈະການສຳປະທານທີ່ບໍ່ຢູ່ໃນກິດຈະການສຳປະທານສະເພາະ ໃຫ້ຍື່ນຄຳຮ້ອງຂໍລົງທຶນ ພ້ອມດ້ວຍເອກະສານປະກອບຕໍ່ ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ.

ສ່ວນກິດຈະການສຳປະທານໃດ ທີ່ມີກົດໝາຍກ່ຽວຂ້ອງກຳນົດກົນໄກໄວ້ຕ່າງຫາກ ໃຫ້ຍື່ນຄຳຮ້ອງຂໍລົງທຶນ ຕໍ່ຂະແໜງການ ຫຼື ທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງທີ່ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ສຳລັບໂຄງການທີ່ລັດມີຂໍ້ມູນຄົບຖ້ວນ ໃຫ້ປະກາດປະມູນ ເພື່ອຄັດເລືອກຜູ້ລົງທຶນ ຕາມກົດໝາຍທີ່ກ່ຽວຂ້ອງ.

ສຳລັບໂຄງການທີ່ມີນັກລົງທຶນຫຼາຍກວ່າ ໜຶ່ງບໍລິສັດ ສະເໜີຂໍລົງທຶນໃນກິດຈະການດຽວກັນ ຫຼື ພື້ນທີ່ດຽວກັນ ໃນໄລຍະເວລາຫ່າງກັນບໍ່ເກີນ ສາມສິບ ວັນ ໃຫ້ດຳເນີນການຄັດເລືອກແບບປຽບທຽບ ຫຼື ປະມູນ ຕາມກົດໝາຍ ທີ່ກ່ຽວຂ້ອງ.

ລັດຖະບານ ເປັນຜູ້ກຳນົດລະບຽບການ ກ່ຽວກັບການປະມູນ.

**ມາດຕາ 46 (ປັບປຸງ) ຂັ້ນຕອນ ແລະ ກຳນົດເວລາໃນການພິຈາລະນາອະນຸຍາດລົງທຶນໃນກິດຈະການສຳປະທານ**

ຂັ້ນຕອນ ແລະ ກຳນົດເວລາໃນການພິຈາລະນາອະນຸຍາດລົງທຶນ ໃນກິດຈະການສຳປະທານ ໃຫ້ປະຕິບັດ ດັ່ງນີ້:

1. ຂັ້ນຕອນການພິຈາລະນາອະນຸຍາດເຊັນ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ເພື່ອສຶກສາຄວາມເປັນ ໄປໄດ້ຂອງໂຄງການ.

ຜູ້ລົງທຶນ ໄດ້ຮັບອະນຸຍາດເຊັນ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ເພື່ອສຶກສາຄວາມເປັນໄປໄດ້ ຂອງໂຄງການໃນກິດຈະການສຳປະທານ ພາຍໃນເວລາ ຫົກສິບຫ້າວັນ ລັດຖະການ ນັບແຕ່ວັນຫ້ອງການບໍລິການ ການລົງທຶນປະຕູດຽວໄດ້ຮັບຄຳຮ້ອງຄົບຖ້ວນ ເປັນຕົ້ນໄປ. ຂັ້ນຕອນການພິຈາລະນາໃຫ້ປະຕິບັດ ດັ່ງນີ້:

1.1. ສຳລັບກິດຈະການສຳປະທານສະເພາະ

ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ຕ້ອງສົ່ງເອກະສານຄຳຮ້ອງຂໍຄຳເຫັນນຳ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ພາຍໃນເວລາ ສອງວັນ ລັດຖະການ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນຕອບຄືນ ພາຍໃນເວລາ ສາມສິບວັນ ລັດຖະການ.

ພາຍຫຼັງມີຄຳເຫັນດີຈາກ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ຕ້ອງຄົ້ນຄວ້າລາຍງານຕໍ່ ກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນາຕົກລົງ ດ້ານຫຼັກການ ແລ້ວຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຈັດກອງປະຊຸມ ເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບຜູ້ລົງທຶນ ໂດຍມີສ່ວນຮ່ວມຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລ້ວລາຍງານຂໍການພິຈາລະນາອະນຸມັດເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ຈາກລັດຖະບານ ພາຍໃນເວລາ ສາມສິບວັນ ລັດຖະການ ໂດຍກະຊວງແຜນການ ແລະ ການລົງທຶນ ຕາງໜ້າລັດຖະບານ ລົງນາມໃນ ບົດບັນທຶກຄວາມເຂົ້າໃຈ ຫຼື

ສັນຍາດັ່ງກ່າວ, ມີຕາງໜ້າຄະນະກຳມະການປົກຄອງຂັ້ນແຂວງ ແລະ ກະຊວງທີ່ກ່ຽວຂ້ອງ ເຊັນເປັນພະຍານ.

ໃນກໍລະນີຄຳເຫັນຈາກ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ບໍ່ເປັນເອກະພາບ ຫຼື ບໍ່ມີຄຳເຫັນຕອບມາ ຕາມກຳນົດເວລາ ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ຕ້ອງເປັນເຈົ້າການ ປະສານສົມທົບ ແລະ ຈັດກອງປະຊຸມປຶກສາຫາລື ແລ້ວລາຍງານຕໍ່ ລັດຖະບານພິຈາລະນາ.

1.2. ສຳລັບກິດຈະການສຳປະທານທີ່ບໍ່ຢູ່ໃນກິດຈະການສຳປະທານສະເພາະ

ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ ຕ້ອງສົ່ງເອກະສານຄຳຮ້ອງ ຂໍຄຳເຫັນນຳ ພະແນກການກ່ຽວຂ້ອງຂອງ ແຂວງ, ນະຄອນຫຼວງ ພາຍໃນເວລາ ສອງວັນ ລັດຖະການ ເພື່ອຄົ້ນຄວ້າ ແລະ ປະສານສົມທົບກັບຂະແໜງການຂັ້ນສູນກາງ ຕາມສາຍຕັ້ງຂອງຕົນ ແລະ ມີຄຳເຫັນຕອບຄືນ ພາຍໃນເວລາສາມສິບວັນ ລັດຖະການ.

ພາຍຫຼັງມີຄຳເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງແລ້ວ ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນແຂວງ ຕ້ອງຄົ້ນຄວ້າລາຍງານຕໍ່ຄະນະກຳມະການປົກຄອງຂັ້ນແຂວງ ເພື່ອພິຈາລະນາຕົກລົງດ້ານຫຼັກການແລ້ວ ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນແຂວງ ຈັດກອງປະຊຸມເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບຜູ້ລົງທຶນ ໂດຍມີສ່ວນຮ່ວມຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານຂໍການພິຈາລະນາອະນຸມັດເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ຈາກຄະນະກຳມະການປົກຄອງຂັ້ນແຂວງ ພາຍໃນເວລາ ສາມສິບວັນລັດຖະການ ໂດຍພະແນກແຜນການ ແລະ ການລົງທຶນຕາງໜ້າຄະນະກຳມະການປົກຄອງຂັ້ນແຂວງ ລົງນາມໃນບົດບັນທຶກຄວາມເຂົ້າໃຈຫຼື ສັນຍາດັ່ງກ່າວ ແລະ ມີຕາງໜ້າ ກະຊວງແຜນການ ແລະ ການລົງທຶນ ແລະກະຊວງທີ່ກ່ຽວຂ້ອງ ເຊັນເປັນພະຍານ.

ໃນກໍລະນີຄຳເຫັນຈາກພາກສ່ວນກ່ຽວຂ້ອງບໍ່ເປັນເອກະພາບ ຫຼື ບໍ່ມີຄຳເຫັນຕອບມາ ຕາມກຳນົດເວລາ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ຕ້ອງເປັນເຈົ້າການປະສານສົມທົບພະແນກການທີ່ກ່ຽວຂ້ອງ ແລະ ຈັດກອງປະຊຸມປຶກສາຫາລື ແລ້ວລາຍງານຕໍ່ຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາ.

1.3. ຜູ້ລົງທຶນ ຕ້ອງວາງເງິນຄ້ຳປະກັນ ຢູ່ຄັງເງິນແຫ່ງຊາດ ກ່ອນວັນເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ.

2. ຂັ້ນຕອນການພິຈາລະນາອະນຸຍາດເຊັນສັນຍາສຳປະທານ

ພາຍຫຼັງເຊັນ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາແລ້ວ ຜູ້ລົງທຶນ ຕ້ອງປະຕິບັດພັນທະ ແລະ ເງື່ອນໄຂ ຂອງບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ດັ່ງກ່າວ ແລະ ໄດ້ຜ່ານການຮັບຮອງບົດສຶກສາຕ່າງໆ ຈາກຂະແໜງການກ່ຽວຂ້ອງ ເປັນຕົ້ນ ໃບຢັ້ງຢືນຮັບຮອງບົດວິພາກເສດຖະກິດ-ເຕັກນິກ, ໃບຢັ້ງຢືນຮັບຮອງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ໃບຢັ້ງຢືນຮັບຮອງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມ ແລະ ໃບຢັ້ງຢືນແຜນທີ່ດິນຂອບເນື້ອທີ່ສຳປະທານ. ຫຼັງຈາກນັ້ນຜູ້ລົງທຶນ ຕ້ອງສະເໜີຕໍ່ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມການແບ່ງຂັ້ນຄຸ້ມຄອງທີ່ກຳນົດໄວ້ໃນບັນຊີກິດຈະການ ສຳປະທານ ເພື່ອຂໍພິຈາລະນາເຊັນສັນຍາສຳປະທານ.

ສຳລັບຂັ້ນສູນກາງ ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງຄົ້ນຄວ້າລາຍງານຕໍ່ກະຊວງແຜນການ ແລະ ການລົງທຶນ, ສຳລັບຂັ້ນແຂວງ ຕ້ອງຄົ້ນຄວ້າລາຍງານຕໍ່ຄະນະກຳມະການປົກຄອງຂັ້ນແຂວງ ເພື່ອພິຈາລະນາຕົກລົງ ດ້ານຫຼັກການ ແລ້ວຫ້ອງການບໍລິການ ການລົງທຶນປະຕູດຽວ ຈັດກອງປະຊຸມເຈລະຈາສັນຍາສຳປະທານ ກັບຜູ້ລົງທຶນ ໂດຍມີສ່ວນຮ່ວມ ຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລ້ວລາຍງານ ຂໍການພິຈາລະນາ ອະນຸມັດເຊັນສັນຍາສຳປະທານຈາກລັດຖະບານ ຫຼື ຄະນະກຳມະການ ປົກຄອງຂັ້ນແຂວງ ໂດຍຂະແໜງການແຜນການ ແລະ ການລົງທຶນ ຕາງໜ້າລັດຖະບານ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ລົງນາມໃນສັນຍາສຳປະທານ ດັ່ງກ່າວ.

ຜູ້ລົງທຶນ ຕ້ອງວາງເງິນຄ້ຳປະກັນ ຢູ່ຄັງເງິນແຫ່ງຊາດ ກ່ອນວັນເຊັນສັນຍາສຳປະທານ ແລະ ປະຕິບັດພັນທະຕ່າງໆ ຕາມສັນຍາ.

3. ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ອອກໃບອະນຸຍາດລົງທຶນ ໃນກິດຈະການສຳປະທານ ຕາມການແບ່ງຂັ້ນຄຸ້ມຄອງ.

### ມາດຕາ 47 ການປ່ຽນແປງການລົງທຶນໃນກິດຈະການສຳປະທານ

ການລົງທຶນໃນກິດຈະການສຳປະທານ ຈະຖືກປ່ຽນແປງໃນກໍລະນີໃດໜຶ່ງ ເຊັ່ນ ເພີ່ມກິດຈະການ, ຜູ້ຖືຮຸ້ນ, ທຶນຈົດທະບຽນ ແລະ ອື່ນໆ ຕາມການສະເໜີຂອງຜູ້ລົງທຶນ ໂດຍໄດ້ຮັບອະນຸຍາດ ຈາກອົງການທີ່ອະນຸຍາດໃຫ້ລົງທຶນໃນກິດຈະການດັ່ງກ່າວ ຕາມຂອບເຂດສິດ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ປັບປຸງ) ການມອບສິດ ຫຼື ໂອນກິດຈະການ ຕາມສັນຍາສຳປະທານ**

ຜູ້ລົງທຶນໃນກິດຈະການສຳປະທານ ສາມາດມອບສິດ ຫຼື ໂອນກິດຈະການ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ໃຫ້ຜູ້ລົງທຶນອື່ນ ຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງໄດ້ຮັບການພິຈາລະນາຕົກລົງ ຈາກລັດຖະບານ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ຕາມການແບ່ງຂັ້ນອະນຸມັດ;

2. ໄດ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂໍ້ 1 ຂອງກົດໝາຍສະບັບນີ້, ປະຕິບັດພັນທະດ້ານການເງິນ ແລະ ພັນທະອື່ນ ຄົບຖ້ວນຕາມສັນຍາ, ກົດໝາຍ ແລະ ລະບຽບການ;

3. ບໍ່ໄດ້ຢູ່ໃນໄລຍະການໄກ່ເກ່ຍ, ຮ້ອງຟ້ອງ ຫຼື ດຳເນີນຄະດີ.

ສຳລັບກິດຈະການສຳປະທານໃນ ຂະແໜງບໍ່ແຮ່, ພະລັງງານ, ທີ່ດິນ, ກະສິກຳ ແລະ ປ່າໄມ້ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ກໍລະນີໄດ້ຮັບອະນຸຍາດໃຫ້ ມອບສິດ ຫຼື ໂອນກິດຈະການ ຕາມສັນຍາຕາມເງື່ອນໄຂ, ຫ້ອງການບໍລິການ ການລົງທຶນປະຕູດຽວ ແຈ້ງຜູ້ລົງທຶນປະຕິບັດພັນທະອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ, ແລ້ວມອບໃຫ້ຂະແໜງການແຜນການ ແລະ ການລົງທຶນ ດັດແກ້ບັນດາເອກະສານການລົງທຶນທີ່ກ່ຽວຂ້ອງ ຫຼັງຈາກນັ້ນ ນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ ຂອງ ສປປ ລາວ ຕາມກົດໝາຍ.

**ມາດຕາ 49 (ປັບປຸງ) ສິດໃນການຮັບຮອງຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີສິດຮັບຮອງກ່ຽວກັບກິດຈະການລົງທຶນ ດັ່ງນີ້:

1. ພິຈາລະນາຮັບຮອງທຶນສົມທົບຂອງລັດ ໃນການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຄງການລົງທຶນລະດັບຊາດ;

3. ໂຄງການກໍ່ສ້າງໂຮງງານພະລັງງານນິວເຄຍ;

4. ການສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທີ່ຕິດພັນກັບ ຂໍ້ 6, 7 ແລະ 8 ຂອງມາດຕານີ້;

5. ການຕໍ່ອາຍຸສຳປະທານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

6. ກິດຈະການທີ່ພົວພັນກັບການຫັນປ່ຽນ ປ່າປ້ອງກັນແຫ່ງຊາດ, ປ່າສະ

ຫງວນແຫ່ງຊາດ, ປ່າຜະລິດ ແລະ ປ່າປ້ອງກັນລະດັບແຂວງ, ປ່າສະຫງວນ ລະດັບແຂວງ;

7. ກິດຈະການທີ່ພົວພັນກັບການຫັນ ປ່ຽນແລວນ້ຳທຳມະຊາດໃນອ່າງຮັບນ້ຳຂະໜາດໃຫຍ່, ການຍົກຍ້າຍຈັດສັນປະຊາຊົນ ແຕ່ ຫ້າຮ້ອຍຄອບຄົວ ຂຶ້ນໄປ, ການສຳປະທານທີ່ດິນ ແຕ່ ສິບພັນເຮັກຕາ ຂຶ້ນໄປ ແລະ ກິດຈະການອື່ນ ທີ່ອາດມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

8. ໂຄງການທີ່ຕ້ອງການໃຫ້ມີນະໂຍບາຍສົ່ງເສີມພິເສດ.

ນອກຈາກໂຄງການທີ່ໄດ້ກຳນົດໃນມາດຕານີ້ແລ້ວ ໃຫ້ປະຕິບັດຕາມກົດໝາຍ ທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

**ມາດຕາ 50 (ປັບປຸງ) ສິດໃນການຮັບຮອງຈາກສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີສິດຮັບຮອງກ່ຽວກັບກິດຈະການລົງທຶນ ດັ່ງນີ້:

1. ການຫັນປ່ຽນທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ຂັ້ນບ້ານ, ປ່າຊຸດໂຊມທີ່ບໍ່ສາມາດຟື້ນຟູຄືນເອງໄດ້ ແລະ ທີ່ດິນປ່າປອກໂຫຼ້ນ ຕາມຂອບເຂດທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ຕາມການສະເໜີຂອງຄະນະກຳມະການປົກຄອງຂັ້ນແຂວງ;

2. ກິດຈະການທີ່ພົວພັນກັບການຫັນປ່ຽນແລວນ້ຳທຳມະຊາດ ໃນອ່າງຮັບນ້ຳຂະໜາດນ້ອຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຕ່ຳກວ່າ ໜຶ່ງຮ້ອຍຄອບຄົວ ແລະ ກິດຈະການອື່ນ ທີ່ອາດມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

3. ການເຊົ່າ ຫຼື ສຳປະທານທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນເອງ ຕາມການສະເໜີຂອງຄະນະກຳມະການປົກຄອງຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

ສຳລັບ ກິດຈະການທີ່ຕິດພັນກັບການສຳປະທານທີ່ດິນ, ພະລັງງານໄຟຟ້າ ແລະ ບໍ່ແຮ່ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

## ໝວດທີ 6
## ທຶນຈົດທະບຽນ ແລະ ການນຳເຂົ້າທຶນ

**ມາດຕາ 51 ທຶນຈົດທະບຽນໃນກິດຈະການທົ່ວໄປ**

ທຶນຈົດທະບຽນໃນກິດຈະການທົ່ວໄປ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 52 (ປັບປຸງ) ທຶນຈົດທະບຽນໃນກິດຈະການສຳປະທານ**

ໂຄງການລົງທຶນໃນກິດຈະການສຳປະທານ ຕ້ອງມີທຶນຈົດທະບຽນຂັ້ນຕ່ຳ ດັ່ງນີ້:

1. ໂຄງການລົງທຶນທີ່ມີມູນຄ່າຕ່ຳກວ່າ 50,000,000 (ຫ້າສິບລ້ານ) ໂດລາສະຫະລັດ ລົງມາ ທຶນຈົດທະບຽນຕ້ອງບໍ່ຫຼຸດ 30% (ສາມສິບສ່ວນຮ້ອຍ) ຂອງທຶນທັງໝົດ;

2. ໂຄງການລົງທຶນທີ່ມີມູນຄ່າແຕ່ 50,000,000 (ຫ້າສິບລ້ານ) ຫາ 100,000,000 (ໜຶ່ງຮ້ອຍລ້ານ) ໂດລາສະຫະລັດ ທຶນຈົດທະບຽນຕ້ອງບໍ່ຫຼຸດ 20% (ຊາວສ່ວນຮ້ອຍ) ຂອງທຶນທັງໝົດ ແຕ່ບໍ່ຫຼຸດ 15,000,000 (ສິບຫ້າລ້ານ) ໂດລາສະຫະລັດ;

3. ໂຄງການລົງທຶນທີ່ມີມູນຄ່າຫຼາຍກວ່າ 100,000,000 (ໜຶ່ງຮ້ອຍລ້ານ) ຫາ 500,000,000 (ຫ້າຮ້ອຍລ້ານ) ໂດລາສະຫະລັດ ທຶນຈົດທະບຽນຕ້ອງບໍ່ຫຼຸດ 5% (ຫ້າສ່ວນຮ້ອຍ) ຂອງທຶນທັງໝົດ ແຕ່ບໍ່ຫຼຸດ 20,000,000 (ຊາວລ້ານ) ໂດລາສະຫະລັດ;

4. ໂຄງການລົງທຶນທີ່ມີມູນຄ່າຫຼາຍກວ່າ 500,000,000 (ຫ້າຮ້ອຍລ້ານ) ໂດລາສະຫະລັດ ຂຶ້ນໄປ ທຶນຈົດທະບຽນຕ້ອງບໍ່ຫຼຸດ 2% (ສອງສ່ວນຮ້ອຍ) ຂອງທຶນທັງໝົດ ແຕ່ບໍ່ຫຼຸດ 25,000,000 (ຊາວຫ້າລ້ານ) ໂດລາສະຫະລັດ.

ທຶນຈົດທະບຽນໃນກິດຈະການສຳປະທານ ຕ້ອງກຳນົດໃຫ້ເຫັນຈະແຈ້ງເປັນຊັບສິນ, ໃນຕະຫຼອດໄລຍະການດຳເນີນທຸລະກິດນັ້ນ ມູນຄ່າຊັບສິນຕ້ອງບໍ່ໃຫ້ຫຼຸດທຶນຈົດທະບຽນ.

**ມາດຕາ 53 (ປັບປຸງ) ການນຳເຂົ້າທຶນໃນກິດຈະການທົ່ວໄປ**

ຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນກິດຈະການທົ່ວໄປ ຕ້ອງນຳທຶນເຂົ້າມາ ຢ່າງໜ້ອຍ 30% (ສາມສິບສ່ວນຮ້ອຍ) ຂອງທຶນຈົດທະບຽນ ໃນກິດຈະການທົ່ວໄປ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດ ດຳເນີນທຸລະກິດ ຫຼື ອະນຸຍາດລົງທຶນ, ສ່ວນທີ່ຍັງເຫຼືອໃຫ້ນຳເຂົ້າມາພາຍໃນເວລາ ໜຶ່ງປີ, ເວັ້ນເສຍແຕ່ກົດໝາຍທີ່ກ່ຽວຂ້ອງຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ການນຳເຂົ້າທຶນ ສາມາດປະຕິບັດໄດ້ເປັນ ເງິນ ແລະ/ຫຼື ວັດຖຸ ຕາມກົດໝາຍທີ່ກ່ຽວຂ້ອງ ຊຶ່ງການນຳເຂົ້າທຶນດັ່ງກ່າວໃນແຕ່ລະຄັ້ງ ຕ້ອງນຳເອກະສານມາຢັ້ງຢືນນຳທະນາຄານແຫ່ງ ສປປ ລາວ.

**ມາດຕາ 54 (ປັບປຸງ) ການນຳເຂົ້າທຶນໃນກິດຈະການສຳປະທານ**

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການສຳປະທານ ຕ້ອງນຳທຶນຈົດທະບຽນ ເຂົ້າມາ ພາຍໃນເວລາ ເກົ້າສິບວັນ ແຕ່ວັນສັນຍາສຳປະທານມີຜົນສັກສິດ ຕາມອັດຕາສ່ວນຕໍ່າສຸດ ດັ່ງນີ້:

1. ສາມສ່ວນຮ້ອຍ (3%) ຂອງທຶນຈົດທະບຽນ ສຳລັບໂຄງການລົງທຶນທີ່ມີມູນຄ່າຕໍ່າກວ່າ 50,000,000 (ຫ້າສິບລ້ານ) ໂດລາສະຫະລັດ;

2. ສອງສ່ວນຮ້ອຍ (2%) ຂອງທຶນຈົດທະບຽນ ສຳລັບໂຄງການການລົງທຶນທີ່ມີມູນຄ່າແຕ່ 50,000,000 (ຫ້າສິບລ້ານ) ຫາ 100,000,000 (ໜຶ່ງຮ້ອຍລ້ານ) ໂດລາສະຫະລັດ;

3. ໜຶ່ງຈ້ຳຫ້າສ່ວນຮ້ອຍ(1.5%)ຂອງທຶນຈົດທະບຽນສຳລັບໂຄງການ ການລົງທຶນທີ່ມີມູນຄ່າຫຼາຍກວ່າ 100,000,000 (ໜຶ່ງຮ້ອຍລ້ານ) ຫາ 500,000,000 (ຫ້າຮ້ອຍລ້ານ) ໂດລາສະຫະລັດ;

4. ໜຶ່ງສ່ວນຮ້ອຍ (1%) ຂອງທຶນຈົດທະບຽນ ສຳລັບໂຄງການລົງທຶນທີ່ມີມູນຄ່າຫຼາຍກວ່າ 500,000,000 (ຫ້າຮ້ອຍລ້ານ) ໂດລາສະຫະລັດ ຂຶ້ນໄປ.

ສ່ວນທຶນຈົດທະບຽນທີ່ຍັງເຫຼືອ ໃຫ້ນຳເຂົ້າມາພາຍໃນເວລາ ສອງປີ ນັບແຕ່ວັນສັນຍາສຳປະທານນັ້ນ ມີຜົນສັກສິດ.

ການນຳເຂົ້າທຶນ ສາມາດປະຕິບັດໄດ້ເປັນ ເງິນ ແລະ/ຫຼື ວັດຖຸ ຕາມກົດໝາຍທີ່ກ່ຽວຂ້ອງ ຊຶ່ງການນຳເຂົ້າທຶນດັ່ງກ່າວໃນແຕ່ລະຄັ້ງ ຕ້ອງນຳເອກະສານມາຢັ້ງຢືນນຳທະນາຄານແຫ່ງ ສປປ ລາວ.

## ໝວດທີ 7
## ຫ້ອງການຜູ້ຕາງໜ້າ

**ມາດຕາ 55 (ປັບປຸງ) ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ**

ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ ແມ່ນ ຫ້ອງການປະສານງານຕາງໜ້າໃຫ້ບໍລິສັດແມ່ ໃນການສຶກສາຊ່ອງທາງການລົງທຶນ, ຕິດຕາມບັນດາໂຄງການທີ່ບໍລິສັດແມ່ໄດ້ເຊັນສັນຍາ ກັບ ລັດ, ຕິດຕາມການເຄື່ອນໄຫວດ້ານທຸລະກິດ, ດ້ານການລົງທຶນ, ການຄ້າ ແລະ ການບໍລິການ ຂອງບໍລິສັດແມ່ ແລະ ພົວພັນກັບພາກສ່ວນຕ່າງໆ ທັງພາກລັດ ແລະ ເອກະຊົນ ຢູ່ ສປປ ລາວ.

**ມາດຕາ 56 (ປັບປຸງ) ການສະເໜີສ້າງຕັ້ງຫ້ອງການຜູ້ຕາງໜ້າ**

ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ຕ້ອງສະເໜີຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອພິຈາລະນາ ແລະ ອອກໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີຂອງນິຕິບຸກຄົນນັ້ນ ເປັນຕົ້ນໄປ.

ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ແມ່ນ ເອກະສານຮັບຮູ້ສິດທີ່ຖືກຕ້ອງຕາມກົດໝາຍ ສາມາດເຄື່ອນໄຫວຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍສະບັບນີ້ ແຕ່ບໍ່ມີສິດເຄື່ອນໄຫວດຳເນີນທຸລະກິດ.

ສຳລັບຫຼັກການໃນການສ້າງຕັ້ງ, ສິດ ແລະ ໜ້າທີ່, ອາຍຸ ແລະ ທຶນ ຂອງຫ້ອງການຜູ້ຕາງໜ້າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ IV
# ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ

**ມາດຕາ 57 (ປັບປຸງ) ເຂດເສດຖະກິດພິເສດ**

ເຂດເສດຖະກິດພິເສດ ແມ່ນ ເຂດການລົງທຶນຢູ່ໃນ ເຂດອຳນາດອະທິປະໄຕ ແລະ ພື້ນແຜ່ນດິນຂອງ ສປປ ລາວ ທີ່ມີກົນໄກຄຸ້ມຄອງບໍລິຫານການລົງທຶນ ແລະ ນະໂຍບາຍສົ່ງເສີມສະເພາະ ຊຶ່ງຖືກສ້າງຕັ້ງຂຶ້ນໂດຍການຕົກລົງຂອງລັດ.

ເຂດເສດຖະກິດພິເສດ ອາດປະກອບດ້ວຍ ນິຄົມອຸດສາຫະກຳ, ເຂດພັດທະນາເຕັກໂນໂລຊີ ແລະ ຂໍ້ມູນ ຂ່າວສານ, ເຂດໂລຊິດສະຕິກ, ເຂດການບໍລິການ, ເຂດການຄ້າ, ເຂດການທ່ອງທ່ຽວ ແລະ ເຂດອື່ນ ຕາມການຕົກລົງຂອງລັດ.

ເຂດເສດຖະກິດພິເສດ ສ້າງເງື່ອນໄຂໃຫ້ແກ່ ການດຶງດູດການລົງທຶນທີ່ນຳໃຊ້ເຕັກໂນໂລຊີລະດັບສູງ, ນຳໃຊ້ນະວັດຕະກຳ ໃນການຜະລິດກະສິກຳເປັນສິນຄ້າ, ການຜະລິດທີ່ສະອາດ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ ເພື່ອການພັດທະນາແບບຍືນຍົງ, ເປັນມິດກັບສິ່ງແວດລ້ອມ.

ເຂດເສດຖະກິດພິເສດ ຂຽນຫຍໍ້ວ່າ "ຂສພ" ຂຽນເປັນພາສາອັງກິດ: Special Economic Zone ແລະ ຂຽນຫຍໍ້ເປັນພາສາອັງກິດ: "SEZ".

**ມາດຕາ 58 (ປັບປຸງ) ການສ້າງຕັ້ງເຂດເສດຖະກິດພິເສດ**

ລັດຖະບານ ຕົກລົງສ້າງຕັ້ງເຂດເສດຖະກິດພິເສດ ຕາມການຄົ້ນຄວ້າສະເໜີຂອງກະຊວງແຜນການ ແລະ ການລົງທຶນ ໂດຍມີການປະສານສົມທົບກັບ ກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລະ ໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ຂໍ້ 4.

**ມາດຕາ 59 (ປັບປຸງ) ເງື່ອນໄຂການສ້າງຕັ້ງເຂດເສດຖະກິດພິເສດ**

ການສ້າງຕັ້ງເຂດເສດຖະກິດພິເສດ ມີເງື່ອນໄຂ ດັ່ງນີ້:

1. ກຳນົດແຈ້ງວັດຖຸປະສົງຂອງເຂດເສດຖະກິດພິເສດ;
2. ມີທີ່ຕັ້ງທີ່ເໝາະສົມກັບວັດຖຸປະສົງ, ກຳນົດເນື້ອທີ່ ແລະ ເຂດແດນຢ່າງຈະແຈ້ງ;
3. ກຳນົດອາຍຸສຳປະທານເຂດທີ່ຊັດເຈນ;
4. ກຳນົດແຈ້ງຜົນປະໂຫຍດຂອງ ລັດ, ຜູ້ພັດທະນາ ແລະ ປະຊາຊົນ;
5. ຜ່ານການປະເມີນຜົນທາງດ້ານເສດຖະກິດ-ເຕັກນິກ ແລະ ສິ່ງແວດລ້ອມ-ສັງຄົມ;
6. ສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຍຸດທະສາດການພັດທະນາເຂດເສດຖະກິດພິເສດ;
7. ຮັບປະກັນການຄຸ້ມຄອງເສດຖະກິດ-ສັງຄົມ, ຄວາມໝັ້ນຄົງ, ຄວາມສະ

ຫງົບ, ຄວາມປອດໄພ ແລະ ຄວາມສະຫງົບເປັນລະບຽບຮຽບຮ້ອຍຂອງສັງຄົມ;

8. ນຳເຂົ້າທຶນໃຫ້ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງກົດໝາຍສະບັບນີ້;

9. ຮັບປະກັນການພັດທະນາແບບຍືນຍົງ, ສົ່ງເສີມ ແລະ ອະນຸລັກວັດທະນະທຳອັນດີງາມຂອງຊາດ.

### ມາດຕາ 60 (ປັບປຸງ) ການຈັດຕັ້ງຄຸ້ມຄອງການລົງທຶນເຂດເສດຖະກິດພິເສດ

ລັດຖະບານ ຄຸ້ມຄອງເຂດເສດຖະກິດພິເສດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດໂດຍມອບໃຫ້ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຄຸ້ມຄອງ ຕາມກົດໝາຍທີ່ກ່ຽວຂ້ອງ.

ການຈັດຕັ້ງຄຸ້ມຄອງການລົງທຶນເຂດເສດຖະກິດພິເສດ ມີ ດັ່ງນີ້:

1. ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ຂັ້ນສູນກາງ;

2. ຄະນະຄຸ້ມຄອງເຂດ ຫຼື ອົງການຄຸ້ມຄອງເຂດ ຂັ້ນແຂວງ;

3. ໜ່ວຍງານບໍລິການ ການລົງທຶນປະຕູດຽວ ປະຈຳຢູ່ເຂດເສດຖະກິດພິເສດ.

ການຈັດຕັ້ງ ແລະ ການຄຸ້ມຄອງ ເຂດເສດຖະກິດພິເສດ ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 61 (ໃໝ່) ເຂດເສດຖະກິດສະເພາະ

ເຂດເສດຖະກິດສະເພາະ ແມ່ນ ເຂດການລົງທຶນທີ່ໄດ້ຮັບການສ້າງຕັ້ງ ໂດຍລັດຖະບານຢູ່ນອກເຂດເສດຖະກິດພິເສດ ເພື່ອດຳເນີນກິດຈະການໃນຂະແໜງການໃດໜຶ່ງສະເພາະ ເປັນຕົ້ນ ນິຄົມອຸດສາຫະກຳ, ເຂດເຕັກໂນໂລຊີລະດັບສູງ.

ການສ້າງຕັ້ງ ແລະ ການຄຸ້ມຄອງ ເຂດເສດຖະກິດສະເພາະ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 62 (ປັບປຸງ) ອາຍຸສຳປະທານທີ່ດິນເພື່ອພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ

ອາຍຸສຳປະທານທີ່ດິນເພື່ອພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ,

ບົດວິພາກເສດຖະກິດ-ເຕັກນິກ ຂອງກິດຈະການ ຕາມກົດໝາຍທີ່ກ່ຽວຂ້ອງ ແຕ່ສູງສຸດບໍ່ໃຫ້ເກີນ ຫ້າສິບປີ.

ອາຍຸສຳປະທານທີ່ດິນເພື່ອພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ສາມາດຕໍ່ໄດ້ໂດຍອີງຕາມຜົນການປະເມີນ ແລະ ຕາມການຕົກລົງຂອງສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ ບົນພື້ນຖານເງື່ອນໄຂຜູ້ພັດທະນາໄດ້ປະຕິບັດສັນຍາສຳປະທານ ຖືກຕ້ອງຕາມກົດໝາຍ, ມີປະສິດທິຜົນ ແລະ ໄດ້ນຳຜົນປະໂຫຍດ ໃຫ້ແກ່ ລັດ ແລະ ສັງຄົມ.

ພາຍຫຼັງສິ້ນສຸດສັນຍາ ທັງສອງຝ່າຍຕ້ອງດຳເນີນການຊຳລະສະສາງຊັບສິນຂອງໂຄງການ ແລະ ມອບໂອນສິດນຳໃຊ້ທີ່ດິນ ພ້ອມດ້ວຍສິ່ງກໍ່ສ້າງ, ພື້ນຖານໂຄງລ່າງທັງໝົດ ທີ່ເປັນຂອງໂຄງການ ໃຫ້ແກ່ລັດຖະບານ ເປັນເຈົ້າຂອງກຳມະສິດ ແລະ ເປັນຜູ້ສືບທອດບໍລິຫານຢ່າງເປັນທາງການ, ການຊຳລະສະສາງ ແລະ ການມອບໂອນ ຕ້ອງໃຫ້ສຳເລັດພາຍໃນເວລາ ສິບສອງເດືອນ ກ່ອນວັນໝົດອາຍຸຂອງສັນຍາ.

### ມາດຕາ 63 (ໃໝ່) ການສະເໜີລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ

ບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ຍື່ນຄຳຮ້ອງຂໍລົງທຶນ ພ້ອມດ້ວຍເອກະສານປະກອບ ຕໍ່ຄະນະຄຸ້ມຄອງເຂດ ໂດຍຜ່ານໜ່ວຍງານບໍລິການການລົງທຶນປະຕູດຽວ ປະຈຳຢູ່ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະນັ້ນ ເພື່ອພິຈາລະນາຕາມກົນໄກການບໍລິການປະຕູດຽວ.

ສຳລັບຜູ້ພັດທະນາທີ່ມີຈຸດປະສົງ ລົງທຶນໃນກິດຈະການໃດໜຶ່ງໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ນອກຈາກບັນດາກິດຈະການຕາມທີ່ໄດ້ກຳນົດໄວ້ໃນສັນຍາພັດທະນາ ຕ້ອງໄດ້ສ້າງເປັນນິຕິບຸກຄົນໃໝ່.

### ມາດຕາ 64 (ໃໝ່) ນະໂຍບາຍສົ່ງເສີມເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ

ນອກຈາກໄດ້ຮັບນະໂຍບາຍສົ່ງເສີມຕາມທີ່ໄດ້ກຳນົດໄວ້ໃນພາກທີ II ຂອງກົດໝາຍສະບັບນີ້ແລ້ວ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຍັງຈະໄດ້ຮັບນະໂຍບາຍສົ່ງເສີມເພີ່ມຕື່ມ ດັ່ງນີ້:

1. ຜູ້ພັດທະນາ ໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລ ເພີ່ມອີກ ຫົກປີ ລວມເປັນ ສິບຫົກປີ ຖ້າລົງທຶນ ຢູ່ເຂດ 1 ແລະ ໄດ້ຮັບນະໂຍບາຍ ຍົກເວັ້ນອາກອນກຳໄລ ເພີ່ມອີກ ສີ່ປີ ລວມເປັນ ແປດປີ ຖ້າລົງທຶນຢູ່ເຂດ 2. ສຳລັບຜູ້ລົງທຶນຢູ່ໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ ຈະໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລເພີ່ມອີກ ສອງປີ ຈາກນະໂຍບາຍ ທີ່ກຳນົດຕາມເຂດ ແລະ ຕາມຂະແໜງການທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ແລະ ຂໍ້ 2 ມາດຕາ 11 ຂອງກົດໝາຍສະບັບນີ້, ຍົກເວັ້ນຂະແໜງການທີ່ໄດ້ກຳນົດໄວ້ໃນ ຂໍ້ 9 ມາດຕາ 9 ຂອງກົດໝາຍສະບັບນີ້;

2. ຜູ້ລົງທຶນໃນ ເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ ຈະໄດ້ຮັບນະໂຍບາຍກ່ຽວກັບ ຄ່າເຊົ່າທີ່ດິນ ຕາມສັນຍາ ແລະ ລະບຽບການ ທີ່ກ່ຽວຂ້ອງ, ມີສິດນຳໃຊ້ທີ່ດິນທີ່ຕົນໄດ້ເຊົ່າ ແລະ ສາມາດໃຫ້ເຊົ່າຕໍ່ ຫຼື ໂອນສິດນຳໃຊ້ທີ່ດິນໃຫ້ຜູ້ລົງທຶນອື່ນ ຕາມອາຍຸສັນຍາທີ່ຕົນໄດ້ເຊົ່າ ໂດຍມີການຢັ້ງຢືນຂອງຄະນະຄຸ້ມຄອງເຂດ;

3. ຜູ້ພັດທະນາ ແລະ ຜູ້ລົງທຶນ ຕ່າງປະເທດ ໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະພ້ອມດ້ວຍສະມາຊິກຄອບຄົວ ຈະໄດ້ຮັບຄວາມສະດວກໃນການຂຶ້ນທະບຽນ, ອອກບັດອະນຸຍາດພັກເຊົາ ແລະ ວິຊາທຸລະກິດເຂົ້າ-ອອກຫຼາຍເທື່ອ ຊຶ່ງແຕ່ລະຄັ້ງບໍ່ເກີນ ສິບປີ. ຄົນຕ່າງປະເທດທີ່ໄດ້ກຳມະສິດ ອະສັງຫາລິມະຊັບ ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ພ້ອມດ້ວຍສະມາຊິກຄອບຄົວ ໂດຍມີການຊຳລະຕົວຈິງ ທຽບເທົ່າ ໜຶ່ງແສນ ໂດລາສະຫະລັດຂຶ້ນໄປ ຈະໄດ້ຮັບນະໂຍບາຍວິຊາເຂົ້າ-ອອກ ຫຼາຍເທື່ອ ຄັ້ງທຳອິດເປັນ ເວລາ ສິບປີ ແລະ ສາມາດຕໍ່ໄດ້.

ສຳລັບ ນິຄົມອຸດສາຫະກຳ ແລະ ເຂດເຕັກໂນໂລຊີລະດັບສູງ ທີ່ລັດຖະບານຕ້ອງການສົ່ງເສີມເປັນພິເສດ ໂດຍໃຫ້ນະໂຍບາຍສູງກວ່າຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ນະໂຍບາຍດ້ານພາສີ, ອາກອນ, ການພັດທະນາໂຄງລ່າງພື້ນຖານ, ການສ້າງແຫຼ່ງສະໜອງພະລັງງານນຳໃຊ້ເອງ, ແຫຼ່ງສະໜອງນ້ຳ, ການຄົ້ນຄວ້າ ແລະ ວິໄຈ, ການປົກປັກຮັກສາສິ່ງແວດລ້ອມ, ການບຳບັດ ແລະ ນຳເອົາສິ່ງເສດເຫຼືອພາຍໃນປະເທດ ມານຳໃຊ້ຄືນນັ້ນ ໃຫ້ລັດຖະບານຄົ້ນຄວ້າ ເປັນນິຕິກຳສະເພາະ ເພື່ອສະເໜີ ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ.

## ພາກທີ V
## ການອອກໄປລົງທຶນຢູ່ຕ່າງປະເທດ

**ມາດຕາ 65 (ປັບປຸງ) ການສະເໜີອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ລົງທຶນ ຢູ່ ສປປ ລາວ ທີ່ມີຈຸດປະສົງອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງຍື່ນຄຳຮ້ອງຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອພິຈາລະນາ ແລະ ອອກໃບອະນຸຍາດ.

ສຳລັບຜູ້ລົງທຶນ ຢູ່ ສປປ ລາວ ທີ່ມີຈຸດປະສົງອອກໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 66 (ປັບປຸງ) ເງື່ອນໄຂການອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ລົງທຶນ ຢູ່ ສປປ ລາວ ຈະອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີເປົ້າໝາຍໂຄງການລົງທຶນຢູ່ຕ່າງປະເທດ;
2. ມີໃບຢັ້ງຢືນການກວດສອບບັນຊີຄືນຫຼັງ ສອງປີ ຫຼ້າສຸດຈາກຂະແໜງການການເງິນ ຫຼື ບໍລິສັດກວດສອບອິດສະລະ;
3. ໄດ້ປະຕິບັດພັນທະດ້ານການເງິນຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ຕໍ່ລັດຖະບານ ສປປ ລາວ;
4. ຕ້ອງປະຕິບັດຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 67 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ລົງທຶນ ຢູ່ ສປປ ລາວ ທີ່ອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ລົງທຶນ ຢູ່ ສປປ ລາວ ທີ່ອອກໄປລົງທຶນຢູ່ຕ່າງປະເທດ ມີສິດ ດັ່ງນີ້:

1. ນຳເງິນ ແລະ ຊັບສິນອອກໄປລົງທຶນຢູ່ຕ່າງປະເທດ ແລະ ກັບຄືນປະເທດພາຍຫຼັງທີ່ໄດ້ປະຕິບັດພັນທະ ຕາມກົດໝາຍ ແລະ ລະບຽບການ ຂອງປະເທດທີ່ຕົນລົງທຶນຢູ່;
2. ນຳເອົາຜົນກຳໄລ ແລະ ລາຍຮັບອື່ນຈາກການດຳເນີນທຸລະກິດ ກັບຄືນ

ປະເທດ;

3. ໄດ້ຮັບການອຳນວຍຄວາມສະດວກ ແລະ ນະໂຍບາຍຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

4. ຈ້າງແຮງງານລາວ ເພື່ອເຮັດວຽກຢູ່ວິສາຫະກິດຂອງຕົນຢູ່ຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ຂອງປະເທດທີ່ຕົນໄປລົງທຶນ.

ຜູ້ລົງທຶນ ຢູ່ ສປປ ລາວ ທີ່ອອກໄປລົງທຶນຢູ່ຕ່າງປະເທດ ມີພັນທະ ດັ່ງນີ້:

1. ປະຕິບັດຕາມກົດໝາຍແລະລະບຽບການຂອງປະເທດທີ່ຕົນໄປລົງທຶນ;

2. ລາຍງານດ້ານການເງິນ ແລະ ການດຳເນີນທຸລະກິດຂອງຕົນ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອແຈ້ງໃຫ້ ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ.

ພາຍຫຼັງສິ້ນສຸດການລົງທຶນຢູ່ຕ່າງປະເທດ ສາມາດນຳທຶນ ແລະ ຊັບສິນກັບຄືນປະເທດ ຕາມກົດໝາຍ ທີ່ກ່ຽວຂ້ອງ.

# ພາກທີ VI
# ສິດ ແລະ ພັນທະຂອງຜູ້ລົງທຶນ

## ໝວດທີ 1
## ສິດຂອງຜູ້ລົງທຶນ

### ມາດຕາ 68 (ປັບປຸງ) ສິດລວມຂອງຜູ້ລົງທຶນ

ສິດລວມຂອງຜູ້ລົງທຶນ ມີ ດັ່ງນີ້:

1. ຂໍສະເໜີລົງທຶນໃນທຸກຂະແໜງການ ແລະ ທຸກເຂດລົງທຶນທີ່ບໍ່ຫວງຫ້າມຕາມກົດໝາຍຂອງ ສປປ ລາວ;

2. ຂໍສະເໜີລົງທຶນຕາມປະເພດ, ຮູບການ ແລະ ຮູບແບບວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ຂໍສຳປະທານໂຄງການນຳ ລັດຖະບານ ຫຼື ຄະນະກຳການປົກຄອງ ຂັ້ນແຂວງ ຕາມແຕ່ລະກໍລະນີ ເພື່ອພັດທະນາໂຄງການໃດໜຶ່ງ;

4. ຂໍສຳປະທານສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດ

ສະເພາະ ນຳລັດຖະບານ;

5. ຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນ ຢູ່ ສປປ ລາວ;

6. ຂໍປ່ຽນວັດຖຸປະສົງ ຫຼື ກິດຈະການລົງທຶນ ໃນກໍລະນີທີ່ການດຳເນີນທຸລະກິດຂອງຕົນ ຫາກບໍ່ມີປະສິດທິຜົນ ເນື່ອງຈາກການປ່ຽນແປງດ້ານນະໂຍບາຍ, ກົດໝາຍທີ່ກ່ຽວຂ້ອງ;

7. ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;

8. ໄດ້ຮັບການອຳນວຍຄວາມສະດວກຈາກລັດໃນດ້ານຕ່າງໆ ໃນການລົງທຶນຂອງຕົນ ທີ່ບໍ່ຂັດກັບກົດໝາຍ;

9. ໄດ້ຮັບຜົນປະໂຫຍດຈາກການ ເຊົ່າ ຫຼື ການສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

10. ສຳລັບຜູ້ ເຊົ່າ ຫຼື ສຳປະທານທີ່ດິນ ມີສິດນຳໃຊ້ທີ່ດິນຕາມອາຍຸເຊົ່າ ຫຼື ສຳປະທານ, ມອບ ຫຼື ໂອນສິດເຊົ່າ ຫຼື ສຳປະທານ ທີ່ດິນ ຕາມອາຍຸຂອງສັນຍາ, ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ບົນພື້ນຖານການເຫັນດີຈາກອົງການທີ່ອະນຸຍາດ;

11. ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ ລວມທັງ ຕຶກ, ອາຄານ ຫຼື ສິ່ງປຸກສ້າງໃນທີ່ດິນທີ່ໄດ້ຮັບການເຊົ່າ ຫຼື ສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍທີ່ກ່ຽວຂ້ອງ;

12. ນຳໃຊ້ເງິນໃນບັນຊີເງິນຝາກ ທີ່ເປີດໄວ້ຢູ່ທະນາຄານທີ່ຕັ້ງ ຢູ່ ສປປ ລາວ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

13. ຍື່ນຄຳຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນ ຖືກເສຍຜົນປະໂຫຍດໃນການລົງທຶນ;

14. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 ສິດໃນການຄຸ້ມຄອງ, ບໍລິຫານກິດຈະການການລົງທຶນຂອງຕົນ**

ສິດໃນການຄຸ້ມຄອງ, ບໍລິຫານກິດຈະການການລົງທຶນຂອງຕົນ ມີ ດັ່ງນີ້:

1. ວາງແຜນການໃນການລົງທຶນ;

2. ຈັດຫາ ແລະ ນຳໃຊ້ວັດຖຸປະກອນ, ພາຫະນະ, ກົນຈັກ ແລະ ເຕັກໂນໂລຊີຕ່າງໆ ເຂົ້າໃນການລົງທຶນ;

3. ເຂົ້າເຖິງຕະຫຼາດ ພາຍໃນ ແລະ ຕ່າງປະເທດ;

4. ຄຸ້ມຄອງແຮງງານໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມປອດໄພ ແລະ ມີຄວາມສະດວກໃນການເຄື່ອນໄຫວທຸລະກິດ;

5. ດຳເນີນກອງປະຊຸມ ເພື່ອປຶກສາຫາລືກ່ຽວກັບການລົງທຶນ;

6. ມອບ ຫຼື ໂອນຮຸ້ນ ໃຫ້ຜູ້ລົງທຶນອື່ນ;

7. ຫຼຸດ ຫຼື ເພີ່ມທຶນ ຂອງກິດຈະການການລົງທຶນ;

8. ສະເໜີຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາກ່ຽວກັບການ ຄວບ, ໂຈະ, ຍຸບເລີກ ຫຼື ປ່ຽນຮູບແບບວິສາຫະກິດຂອງຕົນ;

9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ມາດຕາ 70 (ປັບປຸງ) ສິດໃນການຈ້າງງານ

ສິດໃນການຈ້າງງານ ມີ ດັ່ງນີ້:

1. ເຊັນສັນຍາຈ້າງຜູ້ອອກແຮງງານ, ນັກວິຊາການ, ຜູ້ຊ່ຽວຊານ ເພື່ອເຂົ້າມາເຮັດວຽກໃນວິສາຫະກິດຂອງຕົນ;

2. ນຳເຂົ້າຜູ້ອອກແຮງງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ. ໃນກໍລະນີນຳເຂົ້າເກີນໂກຕາ ໃຫ້ຜູ້ລົງທຶນ ສະເໜີຕໍ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາຕາມຄວາມເໝາະສົມ ບົນພື້ນຖານການປະສານສົມທົບກັບກະຊວງທີ່ກ່ຽວຂ້ອງ;

3. ສັບຊ້ອນ, ຈັດວາງຜູ້ອອກແຮງງານເຂົ້າໃນຕຳແໜ່ງງານຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຂອງວິສາຫະກິດຕົນ;

4. ປະຕິບັດນະໂຍບາຍ ຫຼື ມາດຕະການຕໍ່ຜູ້ອອກແຮງງານ ຢ່າງຖືກຕ້ອງຕາມກົດໝາຍ;

5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

## ມາດຕາ 71 ສິດໃນການຢູ່ອາໄສສຳລັບຜູ້ລົງທຶນຕ່າງປະເທດ

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ ມີສິດອາໄສຢູ່ດິນແດນຂອງ ສປປ ລາວ ຕາມໄລຍະເວລາຂອງການລົງທຶນ. ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ມີສິດອາໄສຢູ່ດິນແດນຂອງ ສປປ ລາວ ຕາມສັນຍາຈ້າງແຮງງານ.

**ມາດຕາ 72 ສິດຂອງຜູ້ລົງທຶນຕ່າງປະເທດໃນການສົ່ງທຶນ, ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ມີສິດສົ່ງທຶນ, ຊັບສິນ ແລະ ລາຍຮັບຂອງຕົນ ເປັນຕົ້ນ ກຳໄລຈາກການລົງທຶນ, ເງິນ ແລະ ຊັບສິນຕ່າງໆ ທີ່ເປັນກຳມະສິດສ່ວນຕົວ ຫຼື ຂອງວິສາຫະກິດ ອອກໄປຕ່າງປະເທດ ໂດຍຜ່ານທະນາຄານ ທີ່ຕັ້ງຢູ່ ສປປ ລາວ ແລະ ການຈັດຕັ້ງລັດທີ່ກ່ຽວຂ້ອງ ພາຍຫຼັງທີ່ໄດ້ປະຕິບັດພັນທະດ້ານພາສີ, ອາກອນ ແລະ ຄ່າທຳນຽມ ໃຫ້ລັດຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ການໂອນຊັບສິນທີ່ເປັນທຶນ ແລະ/ຫຼື ເງິນ ປະກອບດ້ວຍ:

1. ທຶນທີ່ຜ່ານການຢັ້ງຢືນຂອງທະນາຄານແຫ່ງ ສປປ ລາວ;

2. ກຳໄລ, ເງິນປັນຜົນ, ລາຍຮັບຈາກການໃຫ້ເຊົ່າລິຂະສິດ, ຊັບສິນທາງປັນຍາ, ລາຍຮັບຈາກການບໍລິການດ້ານເຕັກນິກວິຊາການ, ດອກເບ້ຍ ແລະ ລາຍໄດ້ອື່ນ ຈາກການລົງທຶນ;

3. ເງິນທີ່ໄດ້ຈາກການຂາຍກິດຈະການ, ຍົກເລີກກິດຈະການທັງໝົດ ຫຼື ສ່ວນໃດໜຶ່ງ;

4. ເງິນທີ່ໄດ້ຮັບຈາກການຊຳລະພາຍໃຕ້ສັນຍາໃດໜຶ່ງ ຊຶ່ງລວມທັງສັນຍາເງິນກູ້, ເງິນທີ່ໄດ້ຈາກຜົນການຕັດສິນຈາກທຸກການໄກ່ເກ່ຍຂໍ້ຂັດແຍ່ງ ຫຼື ການຕັດສິນຈາກສານ ທີ່ອາດພົວພັນ ຫຼື ບໍ່ພົວພັນກັບກິດຈະການການລົງທຶນ;

5. ເງິນຊົດເຊີຍ ຫຼື ເງິນຊຳລະອື່ນ ທີ່ໄດ້ຮັບກ່ອນການຮິບຊັບ ຕາມຄຳຕັດສິນຂອງສານ ຫຼື ການຫັນເປັນຊັບສິນຂອງລັດ;

6. ລາຍໄດ້ ແລະ ເງິນຕອບແທນຂອງພະນັກງານຕ່າງປະເທດ ທີ່ຖືກຈ້າງເຮັດວຽກຢ່າງຖືກຕ້ອງຕາມກົດໝາຍ.

## ໝວດທີ 2
## ພັນທະຂອງຜູ້ລົງທຶນ

**ມາດຕາ 73 (ປັບປຸງ) ພັນທະດ້ານເສດຖະກິດ**

ຜູ້ລົງທຶນ ມີພັນທະດ້ານເສດຖະກິດ ດັ່ງນີ້:

1. ເສຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ, ຄ່າຊັບພະຍາກອນທຳມະຊາດ,

ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ, ໃນກໍລະນີຈຳເປັນ ກໍສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນຂອງ ສປປ ລາວ;

3. ເປີດບັນຊີເງິນຝາກສະເພາະນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ແລະ ນຳໃຊ້ເງິນໃນບັນຊີເງິນຝາກດັ່ງກ່າວ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ໃຫ້ຄວາມຮ່ວມມື ແລະ ປະສານງານ ເປັນຢ່າງດີກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວທຸລະກິດ ພ້ອມທັງສ້າງຕັ້ງຫ້ອງການປະສານງານຢູ່ທ້ອງຖິ່ນ ບ່ອນໂຄງການຕັ້ງຢູ່ ສຳລັບກິດຈະ ການສຳປະທານ;

5. ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີ ໃຫ້ແກ່ຜູ້ອອກແຮງງານລາວ;

6. ໃຫ້ຄວາມຮ່ວມມືໃນການປະເມີນຜົນການດຳເນີນທຸລະກິດຂອງຄູ່ສັນຍາ, ປະກອບທຶນໃນວຽກງານຄຸ້ມຄອງ, ຕິດຕາມ, ກວດກາ ການລົງທຶນ;

7. ລາຍງານທາງດ້ານການເງິນໃນໄລຍະຍົກເວັ້ນ ແລະ ຫຼັງໄລຍະຍົກເວັ້ນອາກອນກຳໄລ ໃຫ້ຂະແໜງການການເງິນ ຕາມລະບຽບການທີ່ກ່ຽວຂ້ອງ;

8. ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນ ປະຈຳ ສາມເດືອນ, ຫົກເດືອນ ແລະ ປະຈຳປີ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 74 (ປັບປຸງ) ພັນທະດ້ານສັງຄົມ**

ຜູ້ລົງທຶນ ມີພັນທະດ້ານສັງຄົມ ດັ່ງນີ້:

1. ປະຕິບັດລະບອບປະກັນສັງຄົມ ແລະ ປະກັນໄພ ຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ໃນວິສາຫະກິດຂອງຕົນ ໂດຍສະເພາະການສ້າງຕັ້ງກຳມະ

ບານຮາກຖານ;

3. ເຄົາລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ;

4. ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກການນຳເນີນທຸລະກິດຂອງຕົນ;

5. ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;

6. ປະກອບສ່ວນທາງດ້ານງົບປະມານ ໃນວຽກງານພັດທະນາສັງຄົມ ຕາມສັນຍາ ແລະ ກົດໝາຍ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 75 (ປັບປຸງ) ພັນທະດ້ານສິ່ງແວດລ້ອມ**

ຜູ້ລົງທຶນ ມີພັນທະດ້ານສິ່ງແວດລ້ອມ ດັ່ງນີ້:

1. ປະຕິບັດພັນທະດ້ານສິ່ງແວດລ້ອມ ຢ່າງເຄັ່ງຄັດ ຕາມກົດໝາຍ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ຫຼື ສັນຍາສາກົນ ທີ່ກ່ຽວຂ້ອງ, ສົ່ງເສີມການພັດທະນາ ແລະ ເຕີບໂຕຕາມທິດສີຂຽວ ແລະ ຍືນຍົງ;

2. ປະຕິບັດມາດຕະການທີ່ຈຳເປັນ ໃນກໍລະນີເກີດບັນຫາດ້ານສິ່ງແວດລ້ອມ ເພື່ອແກ້ໄຂສະພາບດັ່ງກ່າວຢ່າງທັນການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

3. ໃຫ້ຄວາມຮ່ວມມືໃນການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມປະຈຳປີ ຕາມແຜນທີ່ໄດ້ກຳນົດໄວ້ ແລະ ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VII
# ການບໍລິການ ການລົງທຶນປະຕູດຽວ

### ມາດຕາ 76 (ປັບປຸງ) ຫ້ອງການບໍລິການ ການລົງທຶນປະຕູດຽວ

ຫ້ອງການບໍລິການ ການລົງທຶນປະຕູດຽວ ແມ່ນ ການຈັດຕັ້ງຂອງລັດທີ່ສ້າງຕັ້ງຂຶ້ນ ເພື່ອອຳນວຍຄວາມສະດວກ ແລະ ໃຫ້ການບໍລິການໃນການລົງທຶນຢູ່ ສປປ ລາວ. ຫ້ອງການບໍລິການ ການລົງທຶນປະຕູດຽວ ຂຽນຫຍໍ້ວ່າ “ຫລປ”.

ຫ້ອງການບໍລິການ ການລົງທຶນປະຕູດຽວ ມີ ສອງຂັ້ນ ຄື:

1. ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ຂຽນຫຍໍ້ວ່າ ຫລປ.ສ;

2. ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ ຂຽນຫຍໍ້ວ່າ ຫລປ.ຂ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ແລະ ຂັ້ນແຂວງ ໄດ້ກຳນົດໄວ້ໃນລະບຽບການ ຕ່າງຫາກ.

### ມາດຕາ 77 (ປັບປຸງ) ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ

ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ໂດຍແມ່ນ ກົມສົ່ງເສີມການລົງທຶນ ເປັນໃຈກາງປະສານສົມທົບກັບຄະນະປະສານງານການບໍລິການ ການລົງທຶນປະຕູດຽວຂອງບັນດາ ກະຊວງ, ອົງການທີ່ກ່ຽວຂ້ອງ ເຊັ່ນ ຜູ້ຕາງໜ້າຈາກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງອື່ນ ແລະ ອົງການ ລັດທຽບເທົ່າກະຊວງ.

ກະຊວງ, ອົງການລັດທຽບເທົ່າກະຊວງ ມີໜ້າທີ່ສ້າງຕັ້ງຄະນະປະສານງານການບໍລິການ ການລົງທຶນປະຕູດຽວ ປະຈຳອົງການຂອງຕົນ.

### ມາດຕາ 78 (ປັບປຸງ) ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ

ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ ໂດຍແມ່ນ ພະແນກ

ແຜນການ ແລະ ການລົງທຶນເປັນໃຈກາງປະສານສົມທົບກັບຄະນະປະສານງານການບໍລິການ ການລົງທຶນປະຕູດຽວຂອງພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ເປັນຕົ້ນ ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກການເງິນ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກອງບັນຊາການປ້ອງກັນຄວາມສະຫງົບ.

ພະແນກການຂັ້ນແຂວງ ມີໜ້າທີ່ສ້າງຕັ້ງຄະນະປະສານງານການບໍລິການການລົງທຶນປະຕູດຽວປະຈຳພະແນກການຂອງຕົນ.

**ມາດຕາ 79 (ປັບປຸງ) ຫຼັກການບໍລິການ ການລົງທຶນປະຕູດຽວ**

ຫຼັກການບໍລິການ ການລົງທຶນປະຕູດຽວ ມີ ດັ່ງນີ້:

1. ເປັນສູນລວມການບໍລິການການລົງທຶນ ໃຫ້ແກ່ຜູ້ລົງທຶນ ທີ່ລົງທຶນໃນກິດຈະການທົ່ວໄປ ແລະ ສຳປະທານ ລວມທັງການພັດທະນາເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ທັນການ;

2. ເປັນເຈົ້າການປະສານງານກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ບົນພື້ນຖານການປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ລວມສູນການເກັບກຳຂໍ້ມູນ, ຕິດຕາມການຈັດຕັ້ງປະຕິບັດ, ສັງລວມຕີລາຄາປະເມີນຜົນສະພາບການລົງທຶນ ແລະ ໂຄງການລົງທຶນຂອງພາກເອກະຊົນ.

**ມາດຕາ 80 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ**

ຫ້ອງການບໍລິການ ການລົງທຶນປະຕູດຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ອະທິບາຍຊີ້ແຈງດ້ານກົດໝາຍແລະລະບຽບການທີ່ກ່ຽວຂ້ອງກັບວຽກງານລົງທຶນໃຫ້ແກ່ຜູ້ລົງທຶນ;

2. ຮັບຄຳຮ້ອງຂໍລົງທຶນ ທີ່ລົງທຶນໃນກິດຈະການຄວບຄຸມ ແລະ ສຳປະທານ;

3. ສົ່ງເອກະສານຄຳຮ້ອງ ຂໍຄຳເຫັນນຳຂະແໜງການ ແລະ ອົງການປົກ

ຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

4. ຄົ້ນຄວ້າການສະເໜີຂໍລົງທຶນຂອງຜູ້ລົງທຶນ ເພື່ອນຳສະເໜີຕໍ່ກະຊວງແຜນການ ແລະ ການລົງທຶນ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ພິຈາລະນາຕົກລົງ;

5. ປະສານງານກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອອອກ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບອະນຸຍາດອື່ນ ຕາມກົດໝາຍທີ່ກ່ຽວຂ້ອງ ພາຍຫຼັງໄດ້ຮັບອະນຸຍາດລົງທຶນ;

6. ອຳນວຍຄວາມສະດວກທາງດ້ານເອກະສານ, ສະໜອງ ຂໍ້ມູນ ຂ່າວສານກ່ຽວກັບການລົງທຶນໃຫ້ແກ່ນັກລົງທຶນ ໂດຍປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງ;

7. ອະທິບາຍ ແລະ ແນະນຳການປະກອບເອກະສານ ຕາມແບບພິມທີ່ໄດ້ກຳນົດໄວ້ ແລະ ເອກະສານຕ່າງໆ ກ່ຽວກັບວຽກງານລົງທຶນ;

8. ຮັບຄຳຮ້ອງ ແລະ ຄົ້ນຄວ້າກ່ຽວກັບ ການມອບສິດ ຫຼື ໂອນກິດຈະການ, ການປ່ຽນແປງເນື້ອໃນສັນຍາສຳປະທານ, ໃບອະນຸຍາດລົງທຶນ, ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ທີ່ຕິດພັນກັບການເພີ່ມ ຫຼື ຫຼຸດກິດຈະການໃນບັນຊີຄວບຄຸມ;

9. ຮັບຄຳຮ້ອງ ແລະ ຄົ້ນຄວ້າກ່ຽວກັບການຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ;

10. ຮັບຄຳຮ້ອງ ແລະ ຄົ້ນຄວ້າກ່ຽວກັບການສະເໜີອອກໄປລົງທຶນຢູ່ຕ່າງປະເທດ ຂອງນິຕິບຸກຄົນພາຍໃນ;

11. ຮັບຄຳຮ້ອງ ແລະ ຄົ້ນຄວ້າກ່ຽວກັບການສະເໜີຂໍໃບສິ່ງເສີມການລົງທຶນ ແລະ ແຜນນຳເຂົ້າ ຂອງຜູ້ລົງທຶນ;

12. ຮັບ ແລະ ບໍລິການຄຳຮ້ອງຂໍວີຊາ, ບັດແຮງງານ ແລະ ບັດອະນຸຍາດພັກເຊົາ ຂອງຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍ ຄອບຄົວ, ນັກວິຊາການ ແລະແຮງງານຕ່າງປະເທດ;

13. ຮັບຄຳຮ້ອງ, ຄຳສະເໜີ ກ່ຽວກັບຂໍ້ຂັດແຍ່ງຂອງຜູ້ລົງທຶນ ແລະ ປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂບັນຫາດັ່ງກ່າວ;

14. ໃຫ້ການຊ່ວຍເຫຼືອເບື້ອງຕົ້ນ ໃນການແກ້ໄຂບັນຫາ ຫຼື ຂໍ້ສະເໜີ ທີ່ພົວ

ພັນກັບການລົງທຶນ ໂດຍມີການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

15. ໃຫ້ບໍລິການດ້ານຕ່າງໆ ທີ່ກ່ຽວຂ້ອງກັບວຽກງານລົງທຶນແກ່ນັກລົງທຶນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

16. ຕິດຕາມ, ກວດກາ ການລົງທຶນ ແລ້ວລາຍງານຕໍ່ ກະຊວງແຜນການ ແລະ ການລົງທຶນ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃນແຕ່ລະໄລຍະ;

17. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ຫຼື ການມອບໝາຍ.

## ພາກທີ VIII
## ການໂຈະ, ຍົກເລີກ, ສິ້ນສຸດການລົງທຶນ ແລະ ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 81 (ປັບປຸງ) ການໂຈະການຈັດຕັ້ງປະຕິບັດໂຄງການລົງທຶນ

ການຈັດຕັ້ງປະຕິບັດໂຄງການລົງທຶນ ຈະຖືກໂຈະການເຄື່ອນໄຫວ ດັ່ງນີ້:

1. ອົງການທີ່ອະນຸຍາດລົງທຶນ ຫຼື ອະນຸຍາດດຳເນີນທຸລະກິດ ສາມາດໂຈະການດຳເນີນໂຄງການ ຕາມກໍລະນີ ດັ່ງນີ້:

1.1. ຕາມການສະເໜີຂອງ ຂະແໜງການ ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຍ້ອນບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດ ບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍທີ່ກ່ຽວຂ້ອງ ຊຶ່ງອົງການທີ່ອະນຸຍາດລົງທຶນແຈ້ງເຕືອນເປັນລາຍລັກອັກສອນ ໂດຍມີກຳນົດເວລາ ເພື່ອໃຫ້ຜູ້ລົງທຶນແກ້ໄຂ ຫຼື ປັບປຸງໃຫ້ຖືກຕ້ອງ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ ຕາມກຳນົດເວລາການລົງທຶນດັ່ງກ່າວ ກໍຈະຖືກສັ່ງໃຫ້ໂຈະ;

1.2. ຕາມການສະເໜີຂອງຜູ້ລົງທຶນ ຊຶ່ງອົງການທີ່ອະນຸຍາດລົງທຶນ ຕ້ອງປະສານງານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາປະເມີນຜົນ ກ່ອນການພິຈາລະນາອະນຸຍາດໃຫ້ໂຈະ.

2. ອົງການປົກຄອງທ້ອງຖິ່ນ ສາມາດໂຈະການຈັດຕັ້ງປະຕິບັດໂຄງການທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ມີຜົນກະທົບຮ້າຍແຮງຕໍ່ ສັງຄົມ ແລະ ສິ່ງແວດລ້ອມ ໂດຍການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ.

**ມາດຕາ 82 (ປັບປຸງ) ສາເຫດການຍົກເລີກການລົງທຶນ**

ການລົງທຶນ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ລົງທຶນ ຫຼື ຄູ່ສັນຍາຝ່າຍໃດຝ່າຍໜຶ່ງໃນກໍລະນີທີ່ມີການລະເມີດຂໍ້ຜູກພັນຂອງອີກຝ່າຍໃດຝ່າຍໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ກົດໝາຍທີ່ກ່ຽວຂ້ອງ;

2. ບໍ່ສາມາດແກ້ໄຂຕາມກຳນົດເວລາ ທີ່ກຳນົດໄວ້ໃນການແຈ້ງໂຈະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 81 ຂອງກົດໝາຍສະບັບນີ້;

3. ບໍ່ເສຍພັນທະ ພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ທີ່ກ່ຽວຂ້ອງ;

4. ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍົກເລີກການລົງທຶນ;

5. ມີການລົ້ມລະລາຍ ຕາມກົດໝາຍ.

ໃນກໍລະນີມີການຍົກເລີກການລົງທຶນ ຈະບໍ່ພາໃຫ້ຜູ້ລົງທຶນພົ້ນຈາກພັນທະ ແລະ ໜີ້ສິນທີ່ມີຕໍ່ບຸກຄົນ, ນິຕິບຸກຄົນ ແລະ ຕໍ່ລັດ.

**ມາດຕາ 83 (ປັບປຸງ) ການຍົກເລີກການລົງທຶນ**

ການຍົກເລີກການລົງທຶນ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ອະນຸຍາດລົງທຶນ ເປັນຜູ້ອອກໜັງສືແຈ້ງຍົກເລີກການລົງທຶນ;

2. ຫຼັງຈາກໄດ້ຮັບໜັງສືແຈ້ງຍົກເລີກການລົງທຶນ ຜູ້ລົງທຶນຕ້ອງສືບຕໍ່ປະຕິບັດພັນທະຕໍ່ລັດ ແລະ ໃຊ້ແທນໜີ້ສິນແກ່ເຈົ້າໜີ້ ຢ່າງຄົບຖ້ວນ.

**ມາດຕາ 84 (ປັບປຸງ) ການສິ້ນສຸດການລົງທຶນ**

ການລົງທຶນ ຈະສິ້ນສຸດ ໃນກໍລະນີ ດັ່ງນີ້:

1. ບໍ່ຍື່ນຄຳຮ້ອງຂໍຕໍ່ອາຍຸ ກ່ອນວັນໝົດອາຍຸ ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາພັດທະນາໂຄງການ ຫຼື ສັນຍາສຳປະທານ ໂດຍບໍ່ຈຳເປັນຕ້ອງມີການແຈ້ງເຕືອນຈາກລັດ;

2. ໝົດອາຍຸການລົງທຶນຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດລົງທຶນ ຫຼື ໂຄງການລົງທຶນ ໄດ້ປະຕິບັດສຳເລັດແລ້ວ;

3. ມີການຖອນໃບອະນຸຍາດລົງທຶນ ຫຼື ຖືກຍົກເລີກການລົງທຶນຕາມມາດຕາ 83 ຂອງກົດໝາຍສະບັບນີ້;

4. ໄດ້ດຳເນີນການຍຸບເລີກວິສາຫະກິດ ຕາມຂັ້ນຕອນທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍວິສາຫະກິດ;

5. ຍົກເລີກຕາມການສະເໜີຂອງຜູ້ລົງທຶນ ຫຼື ຄູ່ສັນຍາ ໂດຍມີການຢັ້ງຢືນຂອງຂະແໜງການທີ່ກ່ຽວຂ້ອງ;

6. ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍົກເລີກວິສາຫະກິດ ຫຼື ຍົກເລີກກິດຈະການການລົງທຶນ.

### ມາດຕາ 85 (ໃໝ່) ການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງເສດຖະກິດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ມີຜົນສັກສິດໃນແຕ່ລະໄລຍະ.

## ພາກທີ IX
## ຂໍ້ຫ້າມ

### ມາດຕາ 86 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ອະນຸຍາດ, ດຳເນີນທຸລະກິດທີ່ຫວງຫ້າມ ຫຼື ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ຂັດຂວາງການສົ່ງເສີມການລົງທຶນ ຢູ່ ສປປ ລາວ ໃນທຸກຮູບການ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 87 (ປັບປຸງ) ຂໍ້ຫ້າມສຳລັບຜູ້ລົງທຶນ

ຫ້າມຜູ້ລົງທຶນ ມີພຶດຕິກຳ ດັ່ງນີ້:

1. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;

2. ສົມຮູ້ຮ່ວມຄິດ ກັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍທີ່ກ່ຽວຂ້ອງ;

3. ຜູ້ລົງທຶນຕ່າງປະເທດ ຊື້ ຂາຍ ທີ່ດິນ, ໃຫ້ເຊົ່າຕໍ່ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍຂອງສັນຍາ;

4. ເມີນເສີຍ, ຫຼົບຫຼີກການປະຕິບັດພັນທະ, ເຊື່ອງອຳ, ປິດບັງລາຍຮັບ, ກຳໄລ ແລະ ຊຸກເຊື່ອງ ການກະທຳຜິດທີ່ຕິດພັນກັບການເສຍ ພາສີ, ອາກອນ;

5. ແກ່ຍາວເວລາ ແລະ ກົດໜ່ວງຖ່ວງດຶງ ໃນການພັດທະນາໂຄງການ ຫຼື ຈັບຈອງໂຄງການໄວ້ແຕ່ບໍ່ພັດທະນາໄປຕາມແຜນການທີ່ວາງໄວ້.

6. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ, ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ;

7. ກະທຳ ຫຼື ເຄື່ອນໄຫວ ທີ່ມີຜົນກະທົບຕໍ່ສັງຄົມ, ສິ່ງແວດລ້ອມ, ຮີດຄອງປະເພນີ ແລະ ວັດທະນະທຳຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຂອງຊາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 88 (ປັບປຸງ) ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ເມີນເສີຍ, ປະລະໜ້າທີ່, ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ ແລະ ພັກພວກ;

2. ສົມຮູ້ຮ່ວມຄິດ ຫຼື ເອື້ອອຳນວຍຄວາມສະດວກໃຫ້ຜູ້ລົງທຶນ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍທີ່ກ່ຽວຂ້ອງ;

3. ຮັບສິນບົນຈາກຜູ້ລົງທຶນ ຫຼື ຜູ້ທີ່ຫວັງຜົນປະໂຫຍດຈາກການລົງທຶນ;

4. ເປີດເຜີຍເອກະສານລັບຂອງຊາດ, ຂອງລັດຖະການ ແລະ ຂອງຜູ້ລົງທຶນ;

5. ແກ່ຍາວເວລາ ຫຼື ກົດໜ່ວງການພິຈາລະນາເອກະສານຕ່າງໆ ຂອງຜູ້ລົງທຶນ ໂດຍບໍ່ມີເຫດຜົນ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ X
# ການຄຸ້ມຄອງ ແລະ ການກວດກາ ວຽກງານສົ່ງເສີມການລົງທຶນ

## ໝວດທີ 1
## ການຄຸ້ມຄອງວຽກງານສົ່ງເສີມການລົງທຶນ

### ມາດຕາ 89 (ປັບປຸງ) ອົງການຄຸ້ມຄອງວຽກງານສົ່ງເສີມການລົງທຶນ

ລັດຖະບານເປັນຜູ້ຄຸ້ມຄອງວຽກງານສົ່ງເສີມການລົງທຶນຢ່າງລວມສູນແລະເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ຂະແໜງການອຸດສາຫະກໍາ ແລະ ການຄ້າ, ຂະແໜງການການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ປະກອບດ້ວຍ:

1. ຂະແໜງການແຜນການ ແລະ ການລົງທຶນ;
2. ຂະແໜງການອຸດສາຫະກໍາ ແລະ ການຄ້າ;
3. ຂະແໜງການການເງິນ;
4. ຄະນະກໍາມະການປົກຄອງຂັ້ນແຂວງ.

### ມາດຕາ 90 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການແຜນການ ແລະ ການລົງທຶນ

ໃນການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຂະແໜງການແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ບັນຊີຮຽກການລົງທຶນ ແລະ ລະບຽບການກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຢູ່ ສປປ ລາວ ແລະ ການອອກໄປລົງທຶນຢູ່ຕ່າງປະເທດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຢູ່ ສປປ ລາວ ແລະການອອກໄປລົງທຶນຢູ່ຕ່າງປະເທດ;

3. ສ້າງ ແລະ ປະກາດໃຊ້ບັນດາແບບພິມ ທີ່ພົວພັນກັບການຂໍອະນຸຍາດລົງທຶນ ຢູ່ ສປປ ລາວ ຫຼື ການອອກໄປລົງທຶນຢູ່ຕ່າງປະເທດ;

4. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາສຳປະທານ ແລະ ຕາງໜ້າໃຫ້ລັດຖະບານລົງນາມໃນສັນຍາດັ່ງກ່າວ ຕາມການມອບໝາຍຂອງລັດຖະບານ;

5. ຄົ້ນຄວ້າ ແລະ ນຳສະເໜີ ການໂຈະ, ປ່ຽນແປງ ຫຼື ຍົກເລີກໂຄງການ ຫຼື ກິດຈະການ ການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

6. ສ້າງ ແລະ ຄຸ້ມຄອງລະບົບ ຂໍ້ມູນ ຂ່າວສານ, ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງ ເສີມການລົງທຶນ ເພື່ອດຶງດູດການລົງທຶນ ແລະ ການອອກໄປລົງທຶນຢູ່ຕ່າງປະເທດ;

7. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການສົ່ງເສີມການລົງທຶນໃນຂອບເຂດທົ່ວປະເທດ;

8. ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນຂອບເຂດທົ່ວປະເທດ ລວມທັງການຄຸ້ມຄອງ ຜູ້ລົງທຶນພາຍໃນທີ່ໄປລົງທຶນຢູ່ຕ່າງປະເທດ;

9. ຊີ້ນຳ ແລະ ອຳນວຍຄວາມສະດວກ ໃນການດຳເນີນການບໍລິການການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

10. ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມການລົງທຶນ;

11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມການລົງທຶນ;

12. ຄຸ້ມຄອງວຽກງານເຂດເສດຖະກິດພິເສດ;

13. ພິຈາລະນາອະນຸຍາດ ການລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ ແລະ ການລົງທຶນພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

14. ຊີ້ນຳການຈັດຕັ້ງປະຕິບັດ ວຽກງານບໍລິການ ການລົງທຶນປະຕູດຽວໃນການສົ່ງເສີມ ແລະ ດຶງດູດການລົງທຶນ ໃຫ້ມີປະສິດທິພາບ, ປະສິດທິຜົນ;

15. ພິຈາລະນາ ການປ່ຽນແປງ, ການໂຈະ ຫຼື ຍົກເລີກ ການລົງທຶນໃນກິດຈະການຄວບຄຸມ, ກິດຈະການ ສຳປະທານ, ການລົງທຶນພັດທະນາເຂດເສດຖະກິດ

ພິເສດ ແລະ ແລະ ເຂດເສດຖະກິດສະເພາະ ເພື່ອສົ່ງອອກ;

16. ພິຈາລະນາຮັບຮອງການຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ;

17. ພິຈາລະນາການອອກໄປລົງທຶນຢູ່ຕ່າງປະເທດ ຂອງນິຕິບຸກຄົນພາຍໃນ;

18. ພິຈາລະນາອອກໃບສົ່ງເສີມການລົງທຶນ ແລະ ຮັບຮອງແຜນນຳເຂົ້າຂອງຜູ້ລົງທຶນ;

19. ເກັບກຳສະພາບການປະກອບທຶນຈົດທະບຽນ ຂອງຜູ້ລົງທຶນໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ພ້ອມທັງແລກປ່ຽນຂໍ້ມູນດັ່ງກ່າວກັບຂະແໜງການທີ່ກ່ຽວຂ້ອງ;

20. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມການລົງທຶນ ຕາມການມອບໝາຍ;

21. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຄົ້ນຄວ້າບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ເພື່ອສະເໜີລັດຖະບານພິຈາລະນາ;

22. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານສົ່ງເສີມການລົງທຶນຕໍ່ລັດຖະບານ ຢ່າງເປັນປົກກະຕິ;

23. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 91 (ປັບປຸງ) ສິດ ແລະ ໜ້າທີ່ ຂະແໜງການອຸດສາຫະກຳ ແລະ ການຄ້າ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຕາມຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດກ່ຽວກັບຂະແໜງອຸດສາຫະກຳ ແລະ ການຄ້າ ທີ່ຕິດພັນກັບການສົ່ງເສີມການລົງທຶນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ທີ່ຕິດພັນກັບການສົ່ງເສີມການລົງທຶນ;

3. ຄຸ້ມຄອງ ການຈັດຕັ້ງທຸລະກິດ ຂອງທຸກປະເພດວິສາຫະກິດ ກ່ຽວກັບການສ້າງຕັ້ງ, ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ແລະ ການຍຸບເລີກ ຕາມ

ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

4. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ວິສາຫະກິດ;

5. ໃຫ້ບໍລິການ ແລະ ພິຈາລະນາ ອອກ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ຍຸບເລີກວິສາຫະກິດ;

6. ຊຸກຍູ້, ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ; ເກັບກຳ, ປົກປັກຮັກສາ ແລະ ບໍລິການສະໜອງຂໍ້ມູນກ່ຽວກັບທະບຽນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ສາທາລະນະຊົນ;

7. ຊຸກຍູ້, ຕິດຕາມ ກວດກາ ການນຳເຂົ້າ, ການດັດແກ້ ແລະ ການນຳໃຊ້ທຶນຂອງຜູ້ລົງທຶນໃນ ກິດຈະການທົ່ວໄປ ພ້ອມທັງແລກປ່ຽນຂໍ້ມູນດັ່ງກ່າວ ກັບຂະແໜງການທີ່ກ່ຽວຂ້ອງ;

8. ໂຈະການນຳໃຊ້ທະບຽນວິສາຫະກິດ ຕໍ່ວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

9. ລຶບຊື່ວິສາຫະກິດອອກຈາກຖານຂໍ້ມູນວິສາຫະກິດແຫ່ງຊາດ ຕໍ່ວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

10. ລົບລ້າງ ຫຼື ສະເໜີລົບລ້າງ ໃບທະບຽນວິສາຫະກິດ, ສະຫຼຸບ ແລະລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ລັດຖະບານຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 92 ສິດ ແລະ ໜ້າທີ່ ຂອງຂະແໜງການການເງິນ**

ຂະແໜງການການເງິນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ນິຕິກຳກ່ຽວກັບຂະແໜງການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນ;

2. ຄົ້ນຄ້ວາ, ປະກອບຄຳເຫັນ ຕໍ່ການຂໍອະນຸຍາດ ການລົງທຶນ, ຕໍ່ອາຍຸສັນຍາ ແລະ ການປ່ຽນແປງເນື້ອໃນສັນຍາ;

3. ຊຸກຍູ້, ແນະນຳ, ເຜີຍແຜ່, ຕິດຕາມ ການຈັດຕັ້ງປະຕິບັດກົດໝາຍ ແລະນິຕິກຳໃຕ້ກົດໝາຍຂອງຂະແໜງການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນໃຫ້ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

4. ຊຸກຍູ້, ສົ່ງເສີມ, ອໍານວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການການລົງທຶນ, ພ້ອມທັງຕິດຕາມ ແລະ ຄຸ້ມຄອງນະໂຍບາຍ ດ້ານພາສີ, ອາກອນ ຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້;

5. ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນຂອບເຂດທົ່ວປະເທດ;

6. ສະເໜີພາກສ່ວນທີ່ກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດໍາເນີນທຸລະກິດບໍ່ໄປຕາມສັນຍາ, ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະ ການເງິນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

7. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນ ຢູ່ ສປປ ລາວ;

8. ຈັດຕັ້ງປະຕິບັດນະໂຍບາຍການສົ່ງເສີມການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

9. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 93 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະກໍາມະການປົກຄອງຂັ້ນແຂວງ**

ຄະນະກໍາມະການປົກຄອງຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບການສົ່ງເສີມການລົງທຶນ;

2. ສ້າງ ແລະ ຄຸ້ມຄອງລະບົບ ຂໍ້ມູນ ຂ່າວສານ, ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນພາຍໃນທ້ອງຖິ່ນຂອງຕົນ;

3. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາສໍາປະທານ ແລະ ຕາງໜ້າໃຫ້ຂັ້ນແຂວງລົງນາມໃນສັນຍາດັ່ງກ່າວ ຕາມການມອບໝາຍ;

4. ຊຸກຍູ້, ຕິດຕາມກວດກາ, ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການ,

ກິດຈະການ ລວມທັງການ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມການລົງທຶນ;

5. ປະສານສົມທົບກັບບັນດາຂະແໜງການທ້ອງຖິ່ນ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນທ້ອງຖິ່ນຕົນ;

6. ພິຈາລະນາ ການປ່ຽນແປງ, ການໂຈະ ຫຼື ຍົກເລີກ ການລົງທຶນໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ໃນຂັ້ນອະນຸມັດຂອງຕົນ ແລະ ພິຈາລະນາ ການໂຈະຊົ່ວຄາວ ການຈັດຕັ້ງປະຕິບັດໂຄງການໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ທີ່ສູນກາງອະນຸມັດ ທີ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ ແລ້ວສະເໜີຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ພິຈາລະນາ;

7. ຄົ້ນຄວ້າ ແລະ ນຳສະເໜີ ການປ່ຽນແປງ, ການໂຈະ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

8. ອຳນວຍຄວາມສະດວກ ໃນການດຳເນີນການບໍລິການ ການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມການລົງທຶນ ຕາມການມອບໝາຍ ຂອງຂັ້ນເທິງ;

10. ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມການລົງທຶນ;

11. ພິຈາລະນາອະນຸຍາດ ການລົງທຶນໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ໃນຂັ້ນຄຸ້ມຄອງຂອງຕົນ;

12. ຊີ້ນຳການຈັດຕັ້ງປະຕິບັດ ວຽກງານບໍລິການ ການລົງທຶນປະຕູດຽວ ໃນການສົ່ງເສີມ ແລະ ດຶງດູດການລົງທຶນ ໃຫ້ມີປະສິດທິພາບ, ປະສິດທິຜົນ;

13. ຊີ້ນຳ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ສັນຍາ ທີ່ພົວພັນກັບການລົງທຶນໃນຂັ້ນຄຸ້ມຄອງຂອງຕົນ;

14. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານການລົງທຶນຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 94 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື, ອໍານວຍຄວາມສະດວກ ແລະ ປະສານສົມທົບກັບ ຂະແໜງການແຜນການ ແລະ ການລົງທຶນ ໃນການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານສົ່ງເສີມການລົງທຶນ

**ມາດຕາ 95 (ປັບປຸງ) ອົງການກວດກາວຽກງານສົ່ງເສີມການລົງທຶນ**

ອົງການກວດກາວຽກງານສົ່ງເສີມການລົງທຶນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 89 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສະພາການຄ້າ ແລະ ອຸດສາຫະກໍາ, ສື່ມວນຊົນ ແລະ ປະຊາຊົນ.

ອົງການກວດກາວຽກງານສົ່ງເສີມການລົງທຶນ ມີສິດສະເໜີມາດຕະການແກ້ໄຂຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ໃນກໍລະນີທີ່ພົບເຫັນການລະເມີດກົດໝາຍກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

**ມາດຕາ 96 (ປັບປຸງ) ເນື້ອໃນການກວດກາ**

ເນື້ອໃນການກວດກາ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມການລົງທຶນ;

2. ການປະຕິບັດສັນຍາການລົງທຶນ ແລະ ການປະຕິບັດພັນທະຕ່າງໆຂອງ

ຜູ້ລົງທຶນ;

3. ບົດວິພາກເສດຖະກິດ-ເຕັກນິກ, ການປົກປັກຮັກສາສິ່ງແວດລ້ອມລວມທັງຜົນກະທົບຕໍ່ຊັບສິນຂອງລັດ, ປະຊາຊົນ, ຜູ້ລົງທຶນ ແລະ ຜູ້ພັດທະນາ;

4. ການປະຕິບັດມາດຕະການຄວາມປອດໄພຂອງແຮງງານ;

5. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 97 (ປັບປຸງ) ຮູບການ ການກວດກາ

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ແລະ ນອກແຜນການ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການກວດກາວຽກງານສົ່ງເສີມການລົງທຶນ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 98 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການລົງທຶນທີ່ມີປະສິດທິຜົນ, ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຶງດູດ, ການຊຸກຍູ້ການລົງທຶນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 99 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້

ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XII
## ບົດບັນຍັດສຸດທ້າຍ

### ມາດຕາ 100 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 101 (ປັບປຸງ) ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ຕຸລາ 2024 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ແລະ ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງປີ 2016 ສະບັບເລກທີ 80/ສພຊ, ລົງວັນທີ 4 ທັນວາ 2019.

ຜູ້ພັດທະນາ ແລະ ຜູ້ລົງທຶນ ທີ່ໄດ້ຮັບນະໂຍບາຍຕາມສັນຍາກັບລັດຖະບານແມ່ນ ບໍ່ມີການປ່ຽນແປງຈົນກວ່າຈະສິ້ນສຸດສັນຍາ. ຜູ້ພັດທະນາ ແລະ ຜູ້ລົງທຶນຫາກມີຈຸດປະສົງຕ້ອງການຮັບນະໂຍບາຍສົ່ງເສີມການລົງທຶນ ຕາມກົດໝາຍສະບັບນີ້ ຕ້ອງສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ພາຍໃນເວລາ ໜຶ່ງຮ້ອຍແປດ ສິບວັນ ຈາກນັ້ນ ຂະແໜງການດັ່ງກ່າວ ຕ້ອງແຈ້ງໃຫ້ຜູ້ສະເໜີປະຕິບັດ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ